**ລະບຽບການ (EU) ສະບັບເລກທີ 995/2010 ຂອງ ລັດຖະສະພາເອີຣົບ ແລະ ສະພາ ໃນວັນທີ 20 ຕຸລາ 2010 ກຳນົດພັນທະໜ້າທີ່ ຂອງຜູ້ປະກອບການ ທີ່ຈະນຳເອົາໄມ້ ແລະ ຜະລິດຕະພັນໄມ້ ເຂົ້າສູ່ຕະຫຼາດຂອງ EU**

**(ເນື້ອໃນທີ່ກ່ຽວກັບ EEA)**

ລັດຖະສະພາເອີຣົບ (European Parliament) ແລະ ສະຫະພາບເອີຣົບ (European Union),

ອີງຕາມ ສົນທິສັນຍາ ວ່າດ້ວຍພາລະບົດບາດຂອງ ສະຫະພາບເອີຣົບ, ແລະ ໂດຍສະເພາະແມ່ນ ມາດຕາ 192(1) ຂອງລະບຽບການສະບັບນີ້,

ອີງຕາມ ຂໍ້ສະເໜີຈາກ ຄະນະກຳມາທິການເອີຣົບ (European Commission),

ອີງຕາມ ຂໍ້ຄິດເຫັນຂອງ ຄະນະກຳມາທິການເສດຖະກິດ ແລະ ສັງຄົມ ເອີຣົບ (European Economic and Social Committee) ([1]),

ພາຍຫຼັງປຶກສາຫາລືກັບຄະນະກຳມະການຂອງພາກພື້ນ,

ໂດຍປະຕິບັດຕາມ ຂັ້ນຕອນທາງນິຕິກຳແບບສາມັນ (ordinary legislative procedure) ([2]),

ໂດຍທີ່:

(1) ປ່າໄມ້ ສະໜອງຜົນປະໂຫຍດທີ່ກວ້າງຂວາງ ແລະ ຫຼາກຫຼາຍ ຕໍ່ສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ ລວມທັງໄມ້ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ແລະ ການບໍລິການດ້ານສິ່ງແວດລ້ອມ ທີ່ຈຳເປັນຕໍ່ມະນຸດຊາດ, ເປັນຕົ້ນແມ່ນການດຳລົງໄວ້ເຊິ່ງຊີວະນາໆພັນ ແລະ ການດຳເນີນຂອງລະບົບນິເວດ ແລະ ການປົກປ້ອງການປ່ຽນແປງຂອງດິນຟ້າອາກາດ.

(2) ເນື່ອງຈາກຄວາມຕ້ອງການໄມ້ ແລະ ຜະລິດຕະພັນໄມ້ໃນທົ່ວໂລກແມ່ນເພີ່ມຂຶ້ນ, ປະກອບກັບຄວາມຂາດແຄນທາງດ້ານສະຖາບັນ ແລະ ການຄຸ້ມຄອງທີ່ບໍ່ພຽງພໍ ທີ່ປະເຊີນໂດຍຂະແໜງປ່າໄມ້ ໃນຫຼາຍປະເທດທີ່ຜະລິດໄມ້ເປັນສິນຄ້າ, ການຕັດໄມ້ເຖື່ອນ ແລະ ການຄ້າທີ່ກ່ຽວພັນກັນ ໄດ້ກາຍມາເປັນບັນຫາທີ່ໜ້າເປັນຫ່ວງ.

[1] OJ C 318, 23.12.2009, p. 88
[2] Position of the European Parliament of 22 April 2009 (OJ C 184 E, 8.7.2010, p. 145), position of the Council at first reading of 1 March 2010 (OJ C 114 E, 4.5.2010, p. 17) and position of the European Parliament of 7 July 2010 (not yet published in the Official Journal).

(3) ການຕັດໄມ້ເຖື່ອນ ເປັນບັນຫາທີ່ແຜ່ລາມຢ່າງໃຫຍ່ຫຼວງກາຍເປັນບັນຫາໃຫຍ່ຂອງຫຼາຍໆປະເທດຮ່ວມກັນ. ອັນນີ້ເປັນສິ່ງນາບຂູ່ໃຫ້ແກ່ປ່າໄມ້ ເພາະມັນເປັນການປະກອບສ່ວນໃສ່ຂະບວນການຕັດໄມ້ທຳລາຍປ່າ ແລະ ຄວາມເຊື່ອມໂຊມຂອງປ່າໄມ້, ເຊິ່ງເປັນການປ່ອຍກ໊າສກາກບອນໄດອອກໄຊ ເຖິງ 20% ໃນທົ່ວໂລກ, ເປັນການຄຸກຄາມຕໍ່ຊີວະນາໆພັນ, ແລະ ເປັນບ່ອນທຳລາຍການຄຸ້ມຄອງປ່າໄມ້ ແລະ ການພັດທະນາແບບຍືນຍົງ ລວມທັງໂອກາດທາງການຄ້າຂອງຜູ້ປະກອບການທີ່ປະຕິບັດຕາມລະບຽບການທີ່ມີຜົນບັງຄັບໃຊ້. ນອກຈາກນັ້ນ, ມັນຍັງເປັນສາຍເຫດຂອງການກາຍເປັນທະເລຊາຍ ແລະ ການເຊາະເຈື່ອນຂອງດິນ ແລະ ຍັງເປັນສາຍເຫດໃນການປ່ຽນແປງດິນຟ້າອາກາດຢ່າງຮຸນແຮງ ແລະ ນ້ຳຖ້ວມ. ຍິ່ງໄປກວ່ານັ້ນ, ມັນຍັງມີຜົນສະທ້ອນຕໍ່ສັງຄົມ, ການເມືອງ ແລະ ເສດຖະກິດ, ສ່ວນໃຫຍ່ແມ່ນການຂັດຂວາງຄວາມຄືບໜ້າໃນການປົກຄອງທີ່ດີ ແລະ ເປັນໄພນາບຂູ່ຕໍ່ຊີວິດການເປັນຢູ່ຂອງຄົນທ້ອງຖິ່ນ ທີ່ດຳລົງຊີວິດໂດຍອາໄສໃສ່ປ່າໄມ້ເປັນຫລັກ, ແລະ ມັນອາດເຊື່ອມໂຍງເຖິງຂໍ້ຂັດແຍ່ງທີ່ພາໃຫ້ມີການໃຊ້ກຳລັງປະກອບອາວຸດອີກດ້ວຍ. ການຕ້ານບັນຫາການຕັດໄມ້ເຖື່ອນໃນເນື້ອໃນຂອງລະບຽບການນີ້ ແມ່ນຄາດຫວັງທີ່ຈະປະກອບສ່ວນໃສ່ຄວາມພະຍາຍາມຂອງສະຫະພາບ ໃນການຫລຸດຜ່ອນການປ່ຽນແປງຂອງດິນຟ້າອາກາດ ໃນຮູບແບບທີ່ມີປະສິດທິຜົນຄຸ້ມຄ່າກັບການລົງທຶນ ແລະ ເປັນການສະໜັບສະໜູນການປະຕິບັດການ ແລະ ຂໍ້ຜູກພັນຂອງສະຫະພາບໃນຂອບເຂດຂອງກອບອະນຸສັນຍາ ສະຫະປະຊາຊາດ ດ້ານການປ່ຽນແປງຂອງພູມີອາກາດ (United Nations Framework Convention on Climate Change).

(4) ດຳລັດ ສະບັບເລກທີ 1600/2002/EC ຂອງ European Parliament ແລະ ຂອງ Council ສະບັບລົງວັນທີ 22 ກໍລະກົດ 2002 ທີ່ກຳນົດ ແຜນປະຕິບັດການດ້ານຊຸມຊົນ ແລະ ສິ່ງແວດລ້ອມ ຄັ້ງທີ 6 (Sixth Community Environment Action Programme) ([3]) ທີ່ໄດ້ກຳນົດເປັນບູລິມະສິດໃນການດຳເນີນການກວດສອບຄວາມເປັນໄປໄດ້ ໃນການນຳໃຊ້ມາດຕະການທີ່ແຂງຂັນ ໃນການປ້ອງກັນ ແລະ ຕ້ານການຄ້າໄມ້ທີ່ຕັດຢ່າງຜິດກົດໝາຍ ແລະ ການສືບຕໍ່ການເຂົ້າຮ່ວມຢ່າງຕັ້ງໜ້າຂອງສະຫະພາບ ແລະ ບັນດາປະເທດສະມາຊິກ ໃນການຈັດຕັ້ງປະຕິບັດ ມະຕິຕົກລົງ ແລະ ຂໍ້ຕົກລົງຂອງໂລກ ແລະ ຂອງພາກພື້ນ ກ່ຽວກັບບັນຫາທີ່ກ່ຽວພັນກັບປ່າໄມ້.

(5) ການແຈ້ງການຂອງຄະນະກຳມາທິການ ຄັ້ງວັນທີ 21 ພຶດສະພາ 2003 ພາຍໃຕ້ຫົວຂໍ້ 'ຂໍ້ກຳນົດການບັງຄັບໃຊ້ກົດໝາຍປ່າໄມ້, ການປົກຄອງ ແລະ ການຄ້າ (FLEGT): ບົດສະເໜີສຳລັບແຜນປະຕິບັດງານຂອງ EU' ໄດ້ມີຂໍ້ສະເໜີບັນດາມາດຕະການເພື່ອສະໜັບສະໜູນຄວາມພະຍາຍາມຂອງສາກົນໃນການແກ້ໄຂບັນຫາການຕັດໄມ້ເຖື່ອນ ແລະ ການຄ້າທີ່ກ່ຽວພັນກັນ ໃນຂອບເຂດຄວາມພະຍາຍາມໂດຍລວມຂອງສະຫະພາບ ໃນການບັນລຸຜົນສຳເລັດໃນການຄຸ້ມຄອງປ່າໄມ້ຢ່າງຍືນຍົງ.

---

[3] OJ L 242, 10.9.2002, p. 1.

(6) European Parliament ແລະ Council ຍິນດີທີ່ ແຈ້ງໃຫ້ຊາບ (Communication) ແລະ ຮັບຮູ້ເຖິງຄວາມຈຳເປັນສຳລັບ ສະຫະພາບ ເພື່ອປະກອບສ່ວນໃສ່ຄວາມພະຍາຍາມຂອງໂລກ ໃນການແກ້ໄຂບັນຫາການຕັດໄມ້ເຖື່ອນ.

(7) ໂດຍສອດຄ່ອງກັບຈຸດປະສົງຂອງ Communication, ນັ້ນກໍ່ຄື ເພື່ອຮັບປະກັນວ່າ ມີພຽງຜະລິດຕະພັນໄມ້ທີ່ຜະລິດໂດຍສອດຄ່ອງກັບລະບຽບການຂອງປະເທດທີ່ຜະລິດໄມ້ສົ່ງອອກເທົ່ານັ້ນ ທີ່ຖືກສົ່ງເຂົ້າມາຫາສະຫະພາບ, ແລະ ສະຫະພາບ ໄດ້ເຈລະຈາ ລະບຽບການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ໄປຍັງສະຫະພາບເອີຣົບ / ຂໍ້ກຳນົດການບັງຄັບໃຊ້ກົດໝາຍປ່າໄມ້ ການປົກຄອງ ແລະ ການຄ້າ ແລະ ຂໍ້ຕົກລົງການເປັນຮຸ້ນສ່ວນດ້ວຍຄວາມສະໝັກໃຈ (FLEGT VPAs) ກັບບັນດາປະເທດຜູ້ຜະລິດໄມ້ (ປະເທດຄູ່ຄ້າ) ເຊິ່ງໄດ້ສ້າງພັນທະຄວາມຮັບຜິດຊອບໃນການປະຕິບັດຕາມລະບຽບກົດໝາຍ ໃຫ້ແກ່ຄູ່ຄ້າເພື່ອປະຕິບັດ ການອອກໃບອະນຸຍາດ ແລະ ເພື່ອຄວບຄຸມການຄ້າໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ຮັບການກຳນົດໃນ FLEGT VPAs.

(8) ເນື່ອງຈາກເປັນບັນຫາທີ່ໃຫຍ່ ແລະ ມີຄວາມຮີບດ່ວນ, ຈຶ່ງມີຄວາມຈຳເປັນທີ່ສຸດ ທີ່ຈະສະໜັບສະໜູນການຕໍ່ຕ້ານກັບການຕັດໄມ້ເຖື່ອນ ແລະ ການຄ້າທີ່ກ່ຽວພັນກັນ, ທັງນີ້ກໍ່ເພື່ອສະໜັບສະໜູນ ແລະ ເສີມສ້າງການລິເລີ່ມ FLEGT VPAs ແລະ ປັບປຸງຄວາມເປັນອັນໜຶ່ງອັນດຽວກັນລະຫວ່າງນະໂຍບາຍຕ່າງໆທີ່ແນໃສ່ການອະນຸລັກປ່າໄມ້ ແລະ ສາມາດປົກປ້ອງສິ່ງແວດລ້ອມໃຫ້ໄດ້ດີທີ່ສຸດ, ລວມທັງການຕ້ານການປ່ຽນແປງຂອງດິນຟ້າອາກາດ ແລະ ການສູນເສຍຊີວະນາໆພັນ.

(9) ຄວາມພະຍາຍາມຂອງບັນດາປະເທດຕ່າງໆທີ່ໄດ້ບັນລຸຂໍ້ຕົກລົງ FLEGT VPAs ຮ່ວມກັບ ສະຫະພາບ ແລະ ປະສົມປະສານລະບຽບຫລັກການເຂົ້ານຳ, ໂດຍສະເພາະທີ່ກ່ຽວກັບຄຳນິຍາມຂອງໄມ້ທີ່ຜະລິດຢ່າງຖືກກົດໝາຍ, ຄວນໄດ້ຮັບການຮັບຮູ້ ແລະ ໄດ້ຮັບການຊຸກຍູ້ສົ່ງເສີມຍິ່ງຂຶ້ນສຳລັບປະເທດຕ່າງໆ ເພື່ອໃຫ້ບັນລຸຂໍ້ຕົກລົງ FLEGT VPAs. ນອກນັ້ນ, ຄວນຄຳນຶງວ່າ ພາຍໃຕ້ການອອກໃບອະນຸຍາດ FLEGT ມີພຽງໄມ້ທີ່ຜະລິດຢ່າງຖືກຕ້ອງຕາມກົດໝາຍ ທີ່ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງຂອງຊາດ ແລະ ຜະລິດຕະພັນໄມ້ທີ່ຜະລິດຈາກໄມ້ທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນ ໄດ້ຮັບການສົ່ງອອກໄປຫາຕະຫຼາດຂອງ Union. ດັ່ງນັ້ນ, ໄມ້ ທີ່ລວມຢູ່ໃນລາຍການຜະລິດຕະພັນໄມ້ ຕາມລາຍງານໃນເອກະສານຊ້ອນທ້າຍ II ແລະ III ໃນ Council Regulation (EC) ສະບັບເລກທີ 2173/2005 ລົງວັນທີ 20 ທັນວາ 2005 ວ່າດ້ວຍການສ້າງການອອກໃບອະນຸຍາດ FLEGT ສຳລັບການນຳເຂົ້າຂອງ European Community ([4]), ປະເທດຄູ່ຄ້າທີ່ເປັນແຫຼ່ງນຳເຂົ້າ ທີ່ໄດ້ລະບຸຢູ່ລາຍງານໃນເອກະສານຊ້ອນທ້າຍ I ຂອງລະບຽບການ, ຄວນໄດ້ຮັບການພິຈາລະນາວ່າໄດ້ຮັບການຜະລິດຢ່າງຖືກກົດໝາຍ ແລະ ຜະລິດຕະພັນໄມ້ເຫລົ່ານັ້ນ ແມ່ນປະຕິບັດສອດຄ່ອງກັບລະບຽບການ ແລະ ຂໍ້ກຳນົດທີ່ຈັດຕັ້ງປະຕິບັດ.

[4] OJ L 347, 30.12.2005, p. 1.

(10) ຄວນຄຳນຶງເຖິງຄວາມຈິງທີ່ວ່າ ອະນຸສັນຍາ ວ່າດ້ວຍການຄ້າລະຫວ່າງປະເທດ ເຊິ່ງຊະນິດສັດປ່າ ແລະ ພືດປ່າໃກ້ສູນພັນ (CITES) ໄດ້ວາງຂໍ້ກຳນົດໃຫ້ຄູ່ພາຄີ ຕໍ່ກັບ CITES ພຽງເພື່ອອອກໃບອະນຸຍາດ CITES ສຳລັບສົ່ງອອກ ເມື່ອສາຍພັນທີ່ຖືກກຳນົດໃນລາຍການຂອງ CITES ໄດ້ຖືກເກັບກ່ຽວ, ນອກເໜືອຈາກປະການອື່ນແລ້ວ (inter alia), ໂດຍສອດຄ່ອງກັບລະບຽບການຂອງປະເທດທີ່ສົ່ງອອກ. ດັ່ງນັ້ນ ສາຍພັນໄມ້ ທີ່ຢູ່ໃນລາຍການເອກະສານຊ້ອນທ້າຍ A, B ຫຼື C ຂອງ Council Regulation (EC) ສະບັບເລກທີ 338/97 ລົງວັນທີ 9 ທັນວາ 1996 ວ່າດ້ວຍການປົກປ້ອງແນວພັນພືດ ແລະ ສັດປ່າ ໂດຍການຄວບຄຸມການຄ້າໃນທີ່ນັ້ນ ([5]) ຄວນໄດ້ຮັບການພິຈາລະນາວ່າຖືກກົດໝາຍ ແລະ ປະຕິບັດຕາມລະບຽບການ ແລະ ຂໍ້ກຳນົດທີ່ມີຜົນບັງຄັບໃຊ້.

(11) ຄວນຄຳນຶງສະເໜີວ່າ ການນຳເອົາໄມ້ ແລະ ຜະລິດຕະພັນໄມ້ກັບມາໝູນໃຊ້ອີກຄັ້ງໜຶ່ງ ຄວນໄດ້ຮັບການຊຸກຍູ້ສົ່ງເສີມ, ແລະ ໃນນັ້ນ ລວມທັງຜະລິດຕະພັນຕ່າງໆໃນຂອບເຂດຂອງລະບຽບການດັ່ງກ່າວນີ້ ທີ່ຈະວາງອຸປະສັກທີ່ບໍ່ເທົ່າທຽມກັນຕໍ່ກັບຜູ້ປະກອບການ, ໄມ້ ແລະ ຜະລິດຕະພັນໄມ້ທີ່ຖືກນຳໃຊ້ແລ້ວ ທີ່ສິ້ນສຸດວົງຈອນການນຳໃຊ້, ແລະ ຄວນຈະຖືກຖິ້ມເປັນສິ່ງເສດເຫລືອ, ບໍ່ຄວນລວມເຂົ້າໃນຂອບເຂດກຳນົດຂອງລະບຽບການສະບັບນີ້.

(12) ການນຳເອົາໄມ້ຜິດກົດໝາຍ ແລະ ຜະລິດຕະພັນໄມ້ ທີ່ຜະລິດຈາກໄມ້ທີ່ຜິດກົດໝາຍ ເຂົ້າມາຈຳໜ່າຍໃນຕະຫຼາດພາຍໃນຂອງອີຢູ ແມ່ນສິ່ງທີ່ຕ້ອງຫ້າມ ເຊິ່ງອັນນີ້ເປັນໜຶ່ງໃນບັນດາມາດຕະການຂອງລະບຽບການສະບັບນີ້. ເມື່ອຄຳນຶງເຖິງຄວາມຊັບຊ້ອນຂອງການຕັດໄມ້ເຖື່ອນ, ມັນເປັນຕົ້ນຕໍຂອງສາຍເຫດ ແລະ ຜົນກະທົບ, ຄວນມີມາດຕະການທີ່ສະເພາະ ເຊັ່ນ: ມາດຕະການທີ່ແນໃສ່ການປະພຶດປະຕິບັດຂອງຜູ້ປະກອບການ.

(13) ໃນດ້ານແຜນຈັດຕັ້ງປະຕິບັດຂອງ FLEGT, Commission ແລະ, ໃນບ່ອນທີ່ເໝາະສົມ, ບັນດາປະເທດສະມາຊິກ ອາດໃຫ້ການສະໜັບສະໜູນ ແລະ ດຳເນີນການສຶກສາ ແລະ ຄົ້ນຄວ້າ ກ່ຽວກັບລະດັບ ແລະ ລັກສະນະຂອງການຕັດໄມ້ເຖື່ອນ ໃນແຕ່ລະປະເທດ ແລະ ສະໜອງຂໍ້ມູນດັ່ງກ່າວໃຫ້ສາທາລະນະຊົນຮັບຊາບ, ນອກນັ້ນ ກໍ່ຄວນສະໜັບສະໜູນຂໍ້ກຳນົດຂອງຄຳແນະນຳໃນການປະຕິບັດງານຕົວຈິງ ໃຫ້ແກ່ຜູ້ປະກອບການ ກ່ຽວກັບການນຳໃຊ້ລະບຽບການໃນບັນດາປະເທດຜູ້ຜະລິດໄມ້.

(14) ໃນເມື່ອຍັງຂາດຄຳນິຍາມທີ່ເປັນເອກະພາບກັນໃນທົ່ວໂລກ, ລະບຽບກົດໝາຍຂອງປະເທດທີ່ຜະລິດໄມ້, ລວມທັງລະບຽບການ ລວມທັງການຈັດຕັ້ງປະຕິບັດໃນປະເທດນັ້ນໆ ທີ່ກ່ຽວພັນກັບສົນທິສັນຍາສາກົນ ທີ່ເຊິ່ງປະເທດນັ້ນເປັນພາຄີ, ຄວນເປັນພື້ນຖານໃນການນິຍາມຕໍ່ກັບການຕັດໄມ້ຢ່າງຜິດກົດໝາຍ.

---

[5] OJ L 61, 3.3.1997, p. 1.

(15) ຜະລິດຕະພັນໄມ້ຫຼາຍໆຢ່າງ ໄດ້ຜ່ານຂັ້ນຕອນຜະລິດທີ່ຫຼາກຫຼາຍ ກ່ອນ ແລະ ພາຍຫລັງທີ່ໄດ້ສົ່ງເຂົ້າໃນຕະຫຼາດພາຍໃນເປັນຄັ້ງທຳອິດ. ເພື່ອຫຼີກລ່ຽງອຸປະສັກທາງດ້ານການບໍລິຫານທີ່ບໍ່ຈຳເປັນ, ມີພຽງຜູ້ປະກອບການທີ່ສົ່ງໄມ້ ແລະ ຜະລິດຕະພັນໄມ້ ເຂົ້າໃນຕະຫຼາດພາຍໃນເປັນຄັ້ງທຳອິດ ທີ່ຕ້ອງໄດ້ຜ່ານລະບົບການກວດສອບຂໍ້ເທັດຈິງ (due diligence system), ໃນຂະນະທີ່ຮຽກຮ້ອງໃຫ້ຜູ້ຄ້າໃນຕ່ອງໂສ້ການສະໜອງ ຕ້ອງໄດ້ສະໜອງຂໍ້ມູນພື້ນຖານທີ່ຈຳເປັນ ໃຫ້ແກ່ຜູ້ສະໜອງຂອງຕົນ ແລະ ຜູ້ຊື້ ເພື່ອເຮັດໃຫ້ເຂົາເຈົ້າສາມາດກວດສອບໄມ້ ແລະ ຜະລິດຕະພັນໄມ້ໄດ້.

(16) ບົນພື້ນຖານຫລັກການທີ່ເປັນລະບົບ, ຜູ້ປະກອບການທີ່ສົ່ງໄມ້ ແລະ ຜະລິດຕະພັນໄມ້ເຂົ້າໃນຕະຫລາດພາຍໃນຂອງສະຫະພາບເອີຣົບ ເປັນຄັ້ງທຳອິດ ຄວນປະຕິບັດຕາມຂັ້ນຕອນຢ່າງແທດເໝາະ ເພື່ອໃຫ້ແນ່ໃຈວ່າ ໄມ້ທີ່ຜິດກົດໝາຍ ແລະ ຜະລິດຕະພັນໄມ້ ທີ່ຜະລິດຈາກໄມ້ຜິດກົດໝາຍ ບໍ່ໄດ້ຖືກສົ່ງເຂົ້າຕະຫຼາດພາຍໃນຂອງສະຫະພາບເອີຣົບ. ມາຮອດຂັ້ນຕອນສຸດທ້າຍ, ຜູ້ປະກອບການຕ້ອງໄດ້ປະຕິບັດ due diligence ໂດຍຜ່ານລະບົບຂອງມາດຕະການ ແລະ ຂັ້ນຕອນຕ່າງໆ ເພື່ອຫລຸດຜ່ອນຄວາມສ່ຽງໃນການນຳເຂົ້າໄມ້ ແລະ ຜະລິດຕະພັນໄມ້ທີ່ຜິດກົດໝາຍ ເຂົ້າສູ່ຕະຫຼາດພາຍໃນ.

(17) ລະບົບ due diligence ປະກອບມີສາມອົງປະກອບທີ່ຢູ່ໃນການຄຸ້ມຄອງຄວາມສ່ຽງ: ການເຂົ້າເຖິງຂໍ້ມູນ, ການປະເມີນຄວາມສ່ຽງ ແລະ ການຫລຸດຜ່ອນຄວາມສ່ຽງທີ່ໄດ້ຖືກລະບຸໄວ້. ລະບົບ due diligence ຄວນສະໜອງການເຂົ້າເຖິງຂໍ້ມູນ ກ່ຽວກັບແຫລ່ງທີ່ມາ ແລະ ຜູ້ສະໜອງໄມ້ ແລະ ຜະລິດຕະພັນໄມ້ ທີ່ນຳເຂົ້າມາຕະຫຼາດພາຍໃນເປັນຄັ້ງທຳອິດ, ລວມທັງຂໍ້ມູນທີ່ກ່ຽວຂ້ອງ ເຊັ່ນ: ການປະຕິບັດຕາມລະບຽບການທີ່ນຳໃຊ້, ປະເທດທີ່ຜະລິດ, ສາຍພັນ, ຈຳນວນ, ແລະ ໃນບ່ອນທີ່ເປັນເປັນໄປໄດ້ ກໍ່ລະບຸເຂດ ແລະ ການຍອມຮັບໃນການຕັດໄມ້. ບົນພື້ນຖານຂໍ້ມູນດັ່ງກ່າວ, ຜູ້ປະກອບການຄວນດຳເນີນການປະເມີນຄວາມສ່ຽງ. ຖ້າຫາກລະບຸວ່າມີຄວາມສ່ຽງ, ຜູ້ປະກອບການຄວນກຳຈັດຄວາມສ່ຽງດັ່ງກ່າວ ໃນຮູບແບບທີ່ເໝາະສົມກັບຄວາມສ່ຽງທີ່ລະບຸນັ້ນ, ໂດຍແນໃສ່ການປ້ອງກັນການຕັດໄມ້ເຖື່ອນ ແລະ ຜະລິດຕະພັນໄມ້ທີ່ຜະລິດມາຈາກໄມ້ເຖື່ອນດັ່ງກ່າວ ເພື່ອບໍ່ໃຫ້ເຂົ້າມາໃນຕະຫຼາດພາຍໃນ.

(18) ເພື່ອຫລີກລ່ຽງອຸປະສັກທາງດ້ານການບໍລິຫານທີ່ບໍ່ຈຳເປັນ, ຜູ້ປະກອບການທີ່ໄດ້ນຳໃຊ້ລະບົບ ຫຼື ຂັ້ນຕອນ ທີ່ສອດຄ່ອງກັບຂໍ້ກຳນົດຕ່າງໆຂອງລະບຽບການສະບັບນີ້ ບໍ່ຈຳເປັນຈະຕ້ອງສ້າງລະບົບໃໝ່ອີກ.

(19) ເພື່ອຮັບຮູ້ເຖິງວິທີການປະຕິບັດທີ່ດີໃນຂະແໜງການປ່າໄມ້, ການຢັ້ງຢືນ ຫຼື ການຢືນຢັນຈາກຝ່າຍທີສາມເຊິ່ງລວມທັງການຢັ້ງຢືນການປະຕິບັດຕາມລະບຽບການທີ່ນຳໃຊ້ ອາດຈະຖືກນຳໃຊ້ເຂົ້າໃນຂັ້ນຕອນການປະເມີນຄວາມສ່ຽງ.

(20) ຂະແໜງການປ່າໄມ້ ເປັນສິ່ງສຳຄັນທີ່ສຸດສຳລັບເສດຖະກິດຂອງສະຫະພາບ. ອົງການຈັດຕັ້ງຕ່າງໆຂອງຜູ້ປະກອບການ ແມ່ນມີຄວາມສຳຄັນໃນຂະແໜງການ ເພາະນຳສະເໜີຜົນປະໂຫຍດຂອງ ສະຫະພາບ

ໃນລະດັບກ້ວາງຂວາງ ແລະ ພົວພັນກັບຜູ້ມີສ່ວນຮ່ວມຫລາກຫລາຍຝ່າຍ. ໜ່ວຍງານເຫລົ່ານັ້ນ ຍັງມີຄວາມຮູ້ຄວາມສາມາດ ໃນການວິເຄາະລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ເອື້ອອໍານວຍການປະຕິບັດຕາມຢ່າງຖືກຕ້ອງຂອງບັນດາປະເທດສະມາຊິກ, ແຕ່ເຖິງຢ່າງໃດກໍ່ຕາມ ບໍ່ຄວນຈະນໍາໃຊ້ໜ່ວຍງານດັ່ງກ່າວ ໃຫ້ມີອໍານາດໃນຖານະໄດ້ປຽບໃນຕະຫຼາດ. ເພື່ອເອື້ອອໍານວຍການຈັດຕັ້ງປະຕິບັດລະບຽບການສະບັບນີ້ ແລະ ປະກອບສ່ວນໃສ່ການພັດທະນາວິທີການປະຕິບັດງານທີ່ດີ, ອັນນີ້ ມີຄວາມເໝາະສົມທີ່ຈະຮັບຮູ້ໜ່ວຍງານ ທີ່ໄດ້ພັດທະນາ ລະບົບກວດສອບຂໍ້ເທັດຈິງ ທີ່ຕອບສະໜອງໄດ້ຕາມຂໍ້ກໍານົດຂອງລະບຽບການສະບັບນີ້. ລະບຽບການ ແລະ ການເພີກຖອນຄວາມຮັບຮູ້ຂອງໜ່ວຍງານຕິດຕາມ ອາດຈະດໍາເນີນໃນຮູບແບບທີ່ຍຸຕິທໍາ ແລະ ໂປ່ງໃສ. ລາຍການຂອງໜ່ວຍງານທີ່ຖືກຮັບຮູ້ ຄວນອະນຸດຍາດໃຫ້ສາມາດເຂົ້າເຖິງໄດ້ທົ່ວໄປ ເພື່ອເຮັດໃຫ້ຜູ້ປະກອບການນໍາໃຊ້ໄດ້.

(21) ອົງກອນທີ່ຮັບຜິດຊອບ ຄວນດໍາເນີນການກວດກາ ໜ່ວຍງານຕິດຕາມກວດກາຢ່າງເປັນປະຈໍາ ເພື່ອຢັ້ງຢືນວ່າ ເຂົາເຈົ້າປະຕິບັດໄດ້ຕາມພາລະໜ້າທີ່ຢ່າງມີປະສິດທິຜົນ ດັ່ງທີ່ໄດ້ກໍານົດໄວ້ໃນລະບຽບການດັ່ງກ່າວນີ້. ເຖິງຢ່າງໃດກໍ່ຕາມ, ໜ່ວຍງານທີ່ກ່ຽວຂ້ອງ ຄວນພະຍາຍາມດໍາເນີນການກວດກາ ເມື່ອໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງ, ລວມທັງບັນຫາທີ່ເປັນຮູບປະທໍາທີ່ຍົກຂຶ້ນໂດຍບຸກຄົນທີສາມ.

(22) ໜ່ວຍງານທີ່ຮັບຜິດຊອບ ຄວນຕິດຕາມວ່າ ຜູ້ປະກອບການ ປະຕິບັດຕາມພັນທະ ແລະ ໜ້າທີ່ ທີ່ກໍານົດໄວ້ໃນລະບຽບການສະບັບນີ້. ດ້ວຍຈຸດປະສົງດັ່ງກ່າວ ໜ່ວຍງານທີ່ຮັບຜິດຊອບ ຄວນດໍາເນີນການກວດກາຢ່າງເປັນທາງການ, ໂດຍອີງຕາມແຜນທີ່ເໝາະສົມ, ເຊິ່ງອາດລວມທັງການກວດກາສະຖານທີ່ຂອງຜູ້ປະກອບການ ແລະ ການກວດສອບກັບທີ່, ແລະ ຄວນຮຽກຮ້ອງໃຫ້ຜູ້ປະກອບການ ດໍາເນີນການແກ້ໄຂຖ້າເຫັນວ່າຈໍາເປັນ. ຍິ່ງໄປກວ່ານັ້ນ, ໜ່ວຍງານທີ່ຮັບຜິດຊອບ ຄວນພະຍາຍາມດໍາເນີນການກວດກາ ເມື່ອໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງ, ລວມທັງບັນຫາທີ່ເປັນຮູບປະທໍາທີ່ຍົກຂຶ້ນໂດຍຝ່າຍທີສາມ.

(23) ໜ່ວຍງານທີ່ຮັບຜິດຊອບ ຄວນຮັກສາຂໍ້ມູນບັນທຶກກ່ຽວກັບການກວດກາ ແລະ ຂໍ້ມູນທີ່ກ່ຽວຂ້ອງ ທີ່ສາມາດສະໜອງໃຫ້ໄດ້ເມື່ອຈໍາເປັນ ໂດຍສອດຄ່ອງກັບ Directive 2003/4/EC ຂອງ European Parliament ແລະ ຂອງ Council ລົງວັນທີ 28 ມັງກອນ 2003 ກ່ຽວກັບການສາມາດເຂົ້າເຖິງຂໍ້ມູນສິ່ງແວດລ້ອມໄດ້ທົ່ວໄປ ([6]).

(24) ຄໍານຶງເຖິງລັກສະນະທີ່ເປັນສາກົນຂອງການຕັດໄມ້ທີ່ຜິດກົດໝາຍ ແລະ ການຄ້າທີ່ກ່ຽວພັນກັນ, ອົງກອນຮັບຜິດຊອບ ຄວນຮ່ວມມືເຊິ່ງກັນແລະກັນ ກັບອໍານາດການປົກຄອງບໍລິຫານທ້ອງຖິ່ນຂອງປະເທດທີສາມ ແລະ ຄະນະກໍາມະທິການthe Commission.

[6] OJ L 41, 14.2.2003, p. 26.

(25) ເພື່ອອຳນວຍຄວາມສະດວກຕໍ່ຂີດຄວາມສາມາດຂອງຜູ້ປະກອບການ ທີ່ຫາກໍ່ນຳເອົາໄມ້ ຫຼື ຜະລິດຕະພັນໄມ້ ເຂົ້າສູ່ຕະຫຼາດພາຍໃນຂອງ ສະຫະພາບເອີຣົບເປັນຄັ້ງທຳອິດ ເພື່ອໃຫ້ປະຕິບັດຕາມຂໍ້ກຳນົດຕ່າງໆ ໃນລະບຽບການສະບັບນີ້, ໂດຍຄຳນຶງເຖິງສະພາບການຂອງທຸລະກິດຂະໜາດກາງ-ນ້ອຍ, ບັນດາປະເທດສະມາຊິກ, ໂດຍການຊ່ວຍເຫລືອຂອງ ຄະນະກຳມາທິການ (Commission) ຕາມຄວາມເໝາະສົມ, ອາດສະໜອງການຊ່ວຍເຫລືອ ດ້ານວິຊາການ ແລະ ການຊ່ວຍເຫລືອຕ່າງໆ ແລະ ອຳນວຍຄວາມສະດວກໃນການແລກປ່ຽນຂໍ້ມູນ. ການຊ່ວຍເຫລືອດັ່ງກ່າວ ບໍ່ໄດ້ໝາຍຄວາມວ່າ ຜູ້ປະກອບການຈະບໍ່ຈຳເປັນຕ້ອງໄດ້ປະຕິບັດໜ້າທີ່ ໃນການປະຕິບັດ due diligence.

(26) ຜູ້ຄ້າ ແລະ ໜ່ວຍງານຕິດຕາມກວດກາ ຄວນລະເວັ້ນມາດຕະການໃດໆທີ່ອາດເປັນການກີດຂວາງໃນການບັນລຸຈຸດປະສົງຂອງລະບຽບການສະບັບນີ້.

(27) ບັນດາປະເທດສະມາຊິກ ຄວນຮັບປະກັນວ່າ ການຝ່າຝືນລະບຽບການສະບັບນີ້, ລວມທັງການຝ່າຝືນຂອງຜູ້ປະກອບການ, ຜູ້ຄ້າ ແລະ ໜ່ວຍງານຕິດຕາມກວດກາ, ໄດ້ຮັບການລົງໂທດຢ່າງເໝາະສົມ ແລະ ການລົງໂທດດ້ວຍການຕັກເຕືອນ. ກົດລະບຽບຂອງປະເທດ ອາດຈະ, ພາຍຫລັງມີຜົນ, ມີການລົງໂທດທີ່ເໝາະສົມ ແລະ ການຕັກເຕືອນ ແມ່ນນຳໃຊ້ສຳລັບການຝ່າຝືນຂອງການຫ້າມນຳເຂົ້າໄມ້ເຖື່ອນ ແລະ ຜະລິດຕະພັນໄມ້ທີ່ຜະລິດຈາກໄມ້ເຖື່ອນ ສູ່ຕະຫລາດພາຍໃນ ຂອງ ສະຫະພາບເອີຣົບ, ໄມ້ ແລະ ຜະລິດຕະພັນໄມ້ດັ່ງກ່າວ ອາດຈະບໍ່ຈຳເປັນຕ້ອງຖືກທຳລາຍ ແຕ່ວ່າ ອາດຈະຖືກນຳໃຊ້ ຫຼື ຈັດຂາຍເພື່ອຜົນປະໂຫຍດ ສ່ວນລວມ.

(28) ຄະນະກຳມາທິການ (Commission) ຄວນໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງ ເພື່ອນຳໃຊ້ ການປະຕິບັດໂດຍຜ່ານຕົວແທນ (delegated acts) ໂດຍປະຕິບັດຕາມ ມາດຕາ 290 ຂອງສົນທິສັນຍາ ວ່າດ້ວຍການເຄື່ອນໄຫວຂອງສະຫະພາບເອີຣົບ(TFEU) ກ່ຽວກັບຂັ້ນຕອນເພື່ອຮັບຮູ້ ແລະ ເພີກຖອນ ໜ່ວຍການຕິດຕາມກວດກາ, ກ່ຽວກັບບັນທັດຖານການປະເມີນຄວາມສ່ຽງເພີ່ມເຕີມ ທີ່ອາດຈຳເປັນເພື່ອສົ່ງເສີມ ສິ່ງທີ່ໄດ້ສະໜອງໄວ້ແລ້ວໃນລະບຽບການສະບັບນີ້ ແລະ ກ່ຽວກັບລາຍຊື່ຂອງໄມ້ ແລະ ຜະລິດຕະພັນໄມ້ ທີ່ລະບຽບການສະບັບນີ້ມີຜົນນຳໃຊ້. ມັນເປັນສິ່ງສຳຄັນຢ່າງຍິ່ງທີ່ ຄະນະກຳມາທິການ (Commission) ດຳເນີນການປຶກສາຫາລືທີ່ເໝາະສົມ ໃນໄລຍະການກະກຽມວຽກງານ, ລວມທັງລະດັບຊ່ຽວຊານ.

(29) ເພື່ອຮັບປະກັນເງື່ອນໄຂທີ່ເອກະພາບໃນການຈັດຕັ້ງປະຕິບັດ, ອຳນາດໃນການຈັດຕັ້ງປະຕິບັດຄວນ ໄດ້ຮັບການປຶກສາກັບ ຄະນະກຳມາທິການ (Commission) ເພື່ອນຳໃຊ້ກົດລະບຽບລະອຽດ ກ່ຽວກັບຄວາມຖີ່ ແລະ ລັກສະນະຂອງການກວດກາໂດຍໜ່ວຍງານຮັບຜິດຊອບ ກ່ຽວກັບໜ່ວຍງານຕິດຕາມກວດກາ ແລະ ຕໍ່ກັບລະບົບ due diligence ຍົກເວັ້ນທີ່ກ່ຽວກັບບັນທັດຖານຂອງການປະເມີນຄວາມສ່ຽງ. ໂດຍອີງຕາມມາດຕາ 291 TFEU, ກົດລະບຽບ ແລະ ຫລັກການທົ່ວໄປ ກ່ຽວກັບກົນໄກໃນການ

ຄວບຄຸມ ໂດຍບັນດາປະເທດສະມາຊິກ ຂອງ ຄະນະກໍາມາທິການ (Commission) ໃນການປະຕິບັດຕາມສິດໃນການຈັດຕັ້ງປະຕິບັດ ຈະຖືກກໍານົດໄວ້ລ່ວງໜ້າ ໂດຍລະບຽບການທີ່ນໍາໃຊ້ ທີ່ສອດຄ່ອງກັບ ordinary legislative procedure. ການນໍາໃຊ້ທີ່ຍັງຄ້າງຢູ່ ຂອງລະບຽບການໃໝ່ຂອງ Council Decision 1999/468/EC ລົງວັນທີ 28 ມິຖຸນາ 1999 ທີ່ກໍານົດໃນຂັ້ນຕອນສໍາລັບການນໍາໃຊ້ອໍານາດທີ່ໄດ້ຮັບອະນຸຍາດຈາກ ຄະນະກໍາມາທິການ (Commission) ([7]) ສືບຕໍ່ນໍາໃຊ້, ໂດຍມີຂໍ້ຍົກເວັ້ນໃນລະບຽບຂັ້ນຕອນທີ່ມີການກວດສອບລະອຽດ, ເຊິ່ງບໍ່ສາມາດນໍາໃຊ້ໄດ້.

(30) ຜູ້ປະກອບການ ແລະ ໜ່ວຍງານທີ່ຮັບຜິດຊອບ ຄວນກໍານົດໄລຍະເວລາທີ່ເໝາະສົມ ເພື່ອໃຫ້ເຂົາເຈົ້າກະກຽມຕົນເອງ ເພື່ອໃຫ້ສາມາດປະຕິບັດໄດ້ຕາມຂໍ້ກໍານົດໃນລະບຽບການສະບັບນີ້.

(31) ເປົ້າໝາຍຂອງລະບຽບການສະບັບນີ້, ເຊັ່ນວ່າ ການຕ້ານການຕັດໄມ້ຢ່າງຜິດກົດໝາຍ ແລະ ການຄ້າທີ່ກ່ຽວພັນ, ຫາກບໍ່ສາມາດບັນລຸໄດ້ໂດຍບັນດາປະເທດສະມາຊິກແຕ່ພຽງປະເທດໃດປະເທດໜຶ່ງ ແລະດັ່ງນັ້ນ, ດ້ວຍເຫດຜົນທາງດ້ານຂອບເຂດ, ຈຶ່ງອາດຈະສາມາດບັນລຸໄດ້ໃນລະດັບສະຫະພາບ (Union), ສະຫະພາບ (Union)ອາດຈະນໍາໃຊ້ມາດຕະການຕ່າງໆ, ໂດຍສອດຄ່ອງກັບຫລັກການຂອງ principle of subsidiarity ທີ່ກໍານົດໃນມາດຕາ 5 ຂອງ ສົນທິສັນຍາ ວ່າດ້ວຍສະຫະພາບເອີຣົບ. ໂດຍປະຕິບັດຕາມຫລັກການຕາມສ່ວນສ່ວນທີ່ກໍານົດໃນມາດຕານີ້, ລະບຽບການນີ້ ບໍ່ໄດ້ກ່າວນອກເໜືອຈາກສິ່ງທີ່ຈໍາເປັນເພື່ອໃຫ້ບັນລຸຈຸດປະສົງດັ່ງກ່າວນີ້,

ໄດ້ນໍາໃຊ້ລະບຽບການດັ່ງກ່າວນີ້:

*ມາດຕາ 1*

**ສາລະສໍາຄັນ**

ລະບຽບການນີ້ ໄດ້ກໍານົດພັນທະຂອງຜູ້ປະກອບການ ຜູ້ທີ່ສົ່ງໄມ້ ແລະ ຜະລິດຕະພັນໄມ້ ເຂົ້າສູ່ຕະຫຼາດພາຍໃນເປັນຄັ້ງທໍາອິດ, ເຊັ່ນດຽວກັນກັບພັນທະຂອງຜູ້ຄ້າ.

*ມາດຕາ 2*

**ຄໍານິຍາມ**

ສໍາລັບວັດຖຸປະສົງຂອງລະບຽບການສະບັບນີ້, ຈະນໍາໃຊ້ຄໍານິຍາມດັ່ງລຸ່ມນີ້:

(a) 'ໄມ້ ແລະ ຜະລິດຕະພັນໄມ້' ໝາຍເຖິງ ໄມ້ ແລະ ຜະລິດໄມ້ ທີ່ກໍານົດໃນເອກະສານຊ້ອນທ້າຍ, ເຊິ່ງມີຂໍ້ຍົກເວັ້ນສໍາລັບຜະລິດຕະພັນໄມ້ ຫຼື ສ່ວນປະກອບໃດໆຂອງຜະລິດຕະພັນດັ່ງກ່າວ ທີ່ໄດ້ຜະລິດຈາກໄມ້

[7] OJ L 184, 17.7.1999, p. 23.

ຫຼື ຜະລິດຕະພັນໄມ້ ທີ່ໄດ້ສິ້ນສຸດວົງຈອນນຳໃຊ້ແລ້ວ ແລະ ຖ້າບໍ່ດັ່ງນັ້ນ ກໍ່ອາດຖິ້ມເປັນສິ່ງເສດເຫລືອ, ດັ່ງທີ່ໄດ້ກຳນົດໃນມາດຕາ 3(1) ຂອງ Directive 2008/98/EC ຂອງ European Parliament ແລະ ຂອງ Council ລົງວັນທີ 19 ພະຈິກ 2008 ວ່າດ້ວຍສິ່ງເສດເຫລືອ ([8]),

(b) 'ການຈຳໜ່າຍ / placing on the market' ໝາຍເຖິງການສະໜອງບໍ່ວ່າຈະຈະດ້ວຍວິທີການໃດໆ ໂດຍກໍ່ຕາມ ໂດຍບໍ່ຄຳນຶງເຖິງເຕັກນິກການຂາຍທີ່ນຳໃຊ້, ຂອງໄມ້ ຫຼື ຜະລິດຕະພັນໄມ້ ທີ່ສົ່ງເຂົ້າມາຈຳໜ່າຍຢູ່ຕະຫຼາດພາຍໃນເປັນຄັ້ງທຳອິດ ຫຼື ນຳໃຊ້ວິທີການຄ້າຂາຍ, ບໍ່ວ່າຈະເປັນການຊຳລະສະສາງ ຫຼື ບໍ່ມີຄ່າໃຊ້ຈ່າຍໃດໆ. ນອກນັ້ນຍັງລວມເອົາການສະໜອງດ້ວຍວິທີການສື່ສານທາງໄກ ດັ່ງທີ່ລະບຸໃນ Directive 97/7/EC ຂອງ European Parliament ແລະ ຂອງ Council ລົງວັນທີ 20 ພຶດສະພາ 1997 ວ່າດ້ວຍການປົກປ້ອງລູກຄ້າ ໃນດ້ານການເຮັດສັນຍາທາງໄກ ([9]). ການສະໜອງໄມ້ ຫຼື ຜະລິດຕະພັນໄມ້ ທີ່ໄດ້ສົ່ງເຂົ້າໃນຕະຫຼາດພາຍໃນແລ້ວ ບໍ່ຄວນໝາຍເຖິງ 'ການຈຳໜ່າຍ';

(c) 'ຜູ້ປະກອບການ' ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ສົ່ງໄມ້ ຫຼື ຜະລິດຕະພັນໄມ້ ໄປຈຳໜ່າຍໃນຕະຫຼາດ;

(d) 'ຜູ້ຄ້າ' ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນການຄ້າ, ຂາຍ ຫຼື ຊື້ ໄມ້ ຫຼື ຜະລິດຕະພັນໄມ້ ໃນຕະຫຼາດພາຍໃນ ທີ່ມີຢູ່ໃນຕະຫຼາດພາຍໃນແລ້ວ;

(e) 'ປະເທດທີ່ຜະລິດ' ໝາຍເຖິງ ປະເທດ ຫຼື ເຂດແດນ ທີ່ໄມ້ ຫຼື ຜະລິດຕະພັນໄມ້ ຈາກປະເທດຕົ້ນຕໍທີ່ຜະລິດ ຜະລິດຕະພັນດັ່ງກ່າວ;

(f) 'ການຜະລິດໄມ້ຢ່າງຖືກກົດໝາຍ' ໝາຍເຖິງການຜະລິດໄມ້ ໂດຍປະຕິບັດຕາມລະບຽບກົດໝາຍທີ່ນຳໃຊ້ຂອງປະເທດທີ່ຕັດໄມ້;

(g) 'ການຜະລິດໄມ້ຢ່າງຜິດກົດໝາຍ' ໝາຍເຖິງການຜະລິດໄມ້ທີ່ຝ່າຝືນລະບຽບກົດໝາຍ ທີ່ມີຜົນບັງຄັບໃຊ້ໃນປະເທດທີ່ຕັດໄມ້;

(h) 'ລະບຽບກົດໝາຍທີ່ມີຜົນບັງຄັບໃຊ້' ໝາຍເຖິງ ລະບຽບການທີ່ມີຜົນບັງຄັບໃຊ້ ໃນປະເທດທີ່ຕັດໄມ້ ໂດຍກວມເອົາປະເດັນຂ້າງລຸ່ມນີ້:

- ສິດທິໃນການເກັບກ່ຽວໄມ້ ພາຍໃນຂອບເຂດທີ່ໄດ້ຮັບອະນຸຍາດຢ່າງເປັນທາງການ,
- ການຊຳລະ ເພື່ອຂໍສິດທິໃນການເກັບກ່ຽວ ແລະ ໄມ້ ລວມທັງອາກອນຕ່າງໆທີ່ກ່ຽວກັບການເກັບກ່ຽວໄມ້,
- ການເກັບກ່ຽວໄມ້, ລວມທັງລະບຽບການລະບຽບການດ້ານສິ່ງແວດລ້ອມ ແລະ ປ່າໄມ້, ການຄຸ້ມຄອງປ່າໄມ້ ແລະ ການອະນຸລັກຊີວະນາໆພັນ ທີ່ກ່ຽວພັນໂດຍກົງກັບການຕັດໄມ້,
- ສິດທິທາງກົດໝາຍຂອງຝ່າຍທີສາມ ກ່ຽວກັບການນຳໃຊ້ ແລະ ສິດຄອບຄອງ ທີ່ກະທົບໂດຍການຕັດໄມ້, ແລະ
- ການຄ້າ ແລະ ພາສີ, ທີ່ກ່ຽວພັນກັບຂະແໜງການປ່າໄມ້.

*ມາດຕາ 3*

[8] OJ L 312, 22.11.2008, p. 3.
[9] OJ L 144, 4.6.1997, p. 19.

**ສະພາບການປະຈຸບັນ ກ່ຽວກັບຂອງໄມ້ ແລະ ຜະລິດຕະພັນໄມ້ ທີ່ຄອບຄຸມໂດຍ FLEGT ແລະ CITES**

ລາຍການໄມ້ທີ່ລວມໃນຜະລິດຕະພັນໄມ້ ທີ່ລວມຢູ່ໃນເອກະສານຊ້ອນທ້າຍ II ແລະ III ໃນລະບຽບການ Regulation (EC) ສະບັບເລກທີ 2173/2005 ເຊິ່ງກຳເນີດຈາກປະເທດພາຄີ ທີ່ລວມໃນເອກະສານຊ້ອນທ້າຍ I ແລະ ໃນລະບຽບການດັ່ງກ່າວ ແລະ ທີ່ສອດຄ່ອງກັບລະບຽບການດັ່ງກ່າວ ແລະ ຂໍ້ກຳນົດໃນການຈັດຕັ້ງປະຕິບັດ ທີ່ຄວນໄດ້ຮັບການເຫັນຄວນວ່າໄດ້ຕັດຖືກຕ້ອງຕາມກົດໝາຍ ຕາມຈຸດປະສົງຂອງລະບຽບການສະບັບນີ້.

ສາຍພັນຂອງໄມ້ທີ່ລວມໃນລາຍການເອກະສານຊ້ອນທ້າຍ A, B ຫຼື C ໃນ Regulation (EC) ສະບັບເລກທີ 338/97 ແລະ ທີ່ສອດຄ່ອງກັບລະບຽບການດັ່ງກ່າວ ແລະ ຂໍ້ກຳນົດໃນການຈັດຕັ້ງປະຕິບັດ ທີ່ຄວນໄດ້ຮັບການເຫັນຄວນວ່າໄດ້ຕັດຖືກຕ້ອງຕາມກົດໝາຍ ຕາມຈຸດປະສົງຂອງລະບຽບການສະບັບນີ້.

*ມາດຕາ 4*

**ພັນທະໜ້າທີ່ຂອງຜູ້ປະກອບການ**

1. ການສົ່ງໄມ້ ແລະ ຜະລິດຕະພັນໄມ້ທີ່ເຮັດຈາກໄມ້ທີ່ຕັດຜິດກົດໝາຍ ສົ່ງເຂົ້າໃນຕະຫຼາດຂອງສະຫະພາບເອີຣົບ ແມ່ນຖືກເກືອດຫ້າມ.
2. ຜູ້ປະກອບການ ຕ້ອງໄດ້ດຳເນີນການກວດສອບຂໍ້ເທັດຈິງ ເມື່ອນຳເຂົ້າໄມ້ ແລະ ຜະລິດຕະພັນໄມ້ ເຂົ້າສູ່ຕະຫຼາດສະຫະພາບເອີຣົບ. ໃນການດຳເນີນການດັ່ງກ່າວ, ຜູ້ປະກອບການຄວນນຳໃຊ້ກອບວຽກຂອງຂັ້ນຕອນ ແລະ ມາດຕະການຕ່າງໆ, ເຊິ່ງຕໍ່ໄປນີ້ຈະເອີ້ນວ່າ 'ລະບົບການກວດສອບຂໍ້ເທັດຈິງ / due diligence system', ດັ່ງທີ່ກຳນົດໄວ້ໃນມາດຕາ 6.
3. ຜູ້ປະກອບການແຕ່ລະຄົນ ຄວນຮັກສາ ແລະ ປະເມີນລະບົບການກວດສອບຂໍ້ເທັດຈິງຢ່າງເປັນປົກກະຕິ ເຊິ່ງຕົນໄດ້ນຳໃຊ້, ຍົກເວັ້ນແຕ່ຜູ້ປະກອບການທີ່ນຳໃຊ້ລະບົບກວດສອບຂໍ້ເທັດຈິງ ທີ່ສ້າງຂຶ້ນໂດຍໜ່ວຍງານຕິດຕາມກວດກາ ດັ່ງທີ່ລະບຸໄວ້ໃນມາດຕາ 8. ລະບົບການກວດກາທີ່ມີຢູ່ ພາຍໃຕ້ລະບຽບການຂອງຊາດ ແລະ ກົນໄກຕ່ອງໂສ້ຜະລິດຕະພັນແບບສະໝັກໃຈ ເຊິ່ງປະຕິບັດໄດ້ຕາມຂໍ້ກຳນົດຂອງລະບຽບການສະບັບນີ້ ອາດຖືກນຳໃຊ້ເປັນພື້ນຖານສຳລັບລະບົບການກວດສອບຂໍ້ເທັດຈິງ.

*ມາດຕາ 5*

**ພັນທະຂອງການສາມາດສືບຫາວໄດ້**

ຜູ້ຄ້າ, ໂດຍຜ່ານຕ່ອງໂສ້ອຸປະທານ, ຄວນສາມາດກຳນົດ:

(a) ຜູ້ປະກອບການ ຫຼື ຜູ້ຄ້າ ທີ່ໄດ້ສະໜອງໄມ້ ແລະ ຜະລິດຕະພັນໄມ້; ແລະ

(b) ໃນບ່ອນທີ່ເໝາະສົມ, ຜູ້ຄ້າ ທີ່ໄດ້ສະໜອງໄມ້ ແລະ ຜະລິດຕະພັນໄມ້.

ຜູ້ຄ້າ ຄວນເກັບຮັກສາຂໍ້ມູນທີ່ອ້າງອີງໃນວັກທໍາອິດ ຢ່າງໜ້ອຍເປັນເວລາ ຫ້າປີ ແລະ ຄວນສະໜອງຂໍ້ມູນດັ່ງກ່າວ ໃຫ້ແກ່ເຈົ້າໜ້າທີ່ພະນັກງານ ຖ້າເຂົາເຈົ້າຕ້ອງການ.

*ມາດຕາ 6*

## ລະບົບການກວດສອບຂໍ້ເທັດຈິງ

1. ລະບົບການກວດສອບຂໍ້ເທັດຈິງ ໄດ້ລະບຸໄວ້ໃນມາດຕາ 4(2) ເຊິ່ງຕ້ອງປະກອບມີອົງປະກອບດັ່ງນີ້:
   (a) ມາດຕະການ ແລະ ຂັ້ນຕອນ ທີ່ຊ່ວຍໃຫ້ສາມາດເຂົ້າເຖິງຂໍ້ມູນ ກ່ຽວກັບການສະໜອງໄມ້ ຫຼື ຜະລິດຕະພັນໄມ້ໃນຕະຫຼາດອີຢູ ຂອງຜູ້ປະກອບການ:
      - ການບັນຍາຍ, ລວມທັງຊື່ທາງການຄ້າ ແລະ ປະເພດຂອງຜະລິດຕະພັນ ລວມທັງຊື່ທົ່ວໄປຂອງສາຍພັນໄມ້, ຖ້າເປັນໄປໄດ້ ກໍ່ໃຫ້ລະບຸຊື່ເຕັມທາງວິທະຍາສາດ,
      - ປະເທດທີ່ຕັດໄມ້, ແລະ ຖ້າເປັນໄປໄດ້:
        (i) ເຂດພາກພື້ນ ທີ່ຕັດໄມ້; ແລະ
        (ii) ການຍິນຍອມເຫັນດີໃຫ້ຕັດໄມ້,
      - ຈໍານວນ (ໃຫ້ລະບຸປະລິມານ, ນໍ້າໜັກຂອງໄມ້ແຕ່ລະຕົວ),
      - ຊື່ ແລະ ທີ່ຢູ່ຂອງຜູ້ສະໜອງໃຫ້ກັບຜູ້ປະກອບການ,
      - ຊື່ ແລະ ທີ່ຢູ່ຂອງຜູ້ຄ້າ ຜູ້ທີ່ສະໜອງໄມ້ ແລະ ຜະລິດຕະພັນໄມ້ ໃຫ້,
      - ບັນທຶກ ຫຼື ສະໜອງຂໍ້ມູນອື່ນໆ ທີ່ລະບຸເຖິງການປະຕິບັດຕາມລະບຽບການຂອງໄມ້ ແລະ ຜະລິດຕະພັນໄມ້ ທີ່ມີຜົນບັງຄັບໃຊ້;
   (b) ຂັ້ນຕອນການປະເມີນຜົນກະທົບ ເພື່ອເອື້ອອໍານວຍໃຫ້ແກ່ຜູ້ປະກອບການ ສາມາດວິເຄາະ ແລະ ປະເມີນຄວາມສ່ຽງຂອງການຕັດໄມ້ຢ່າງຜິດກົດໝາຍ ຫຼື ຜະລິດຕະພັນໄມ້ ທີ່ເຮັດຈາກໄມ້ທີ່ຕັດແບບຜິດກົດໝາຍ ທີ່ສົ່ງເຂົ້າສູ່ຕະຫຼາດສະຫະພາບເອີຣົບ.

ຂັ້ນຕອນດັ່ງກ່າວ ຄວນຄໍານຶງເຖິງຂໍ້ມູນທີ່ກໍານົດໃນຂໍ້ (a) ລວມທັງບັນທັດຖານໃນການປະເມີນຜົນທີ່ເໝາະສົມ, ລວມທັງ:

- ການຮັບປະກັນການປະຕິບັດຢ່າງຖືກຕ້ອງກັບລະບຽບການທີ່ມີຜົນບັງຄັບໃຊ້, ເຊິ່ງອາດຈະລວມທັງການຢັ້ງຢືນ ຫຼື ການຢືນຢັນຄວາມຖືກຕ້ອງຈາກຝ່າຍທີສາມ ເຊິ່ງກວມເອົາການປະຕິບັດຕາມລະບຽບການທີ່ມີຜົນບັງຄັບໃຊ້,
- ຄວາມແຜ່ຫລາຍຂອງການຕັດໄມ້ໃນແນວພັນສະເພາະ ທີ່ຜິດກົດໝາຍ ,
- ຄວາມແຜ່ຫລາຍຂອງການຕັດໄມ້ທີ່ຜິດກົດໝາຍໃນປະເທດທີ່ຕັດໄມ້ ແລະ/ຫລື ຂົງເຂດພາກພື້ນທີ່ຕັດໄມ້, ລວມທັງພິຈາລະນາເຖິງຄວາມແຜ່ຫຼາຍຂອງການຂັດແຍ່ງແບບໃຊ້ກໍາລັງອາວຸດ,

— ການນຳໃຊ້ມາດຕະການລົງໂທດ ໂດຍ ຄະນະກຳມາທິການຄວາມມັ່ນຄົງຂອງສະຫະປະຊາຊາດ (UN Security Council) ຫຼື Council ຂອງ ສະຫະພາບເອີຣົບ ຕໍ່ການນຳເຂົ້າ ແລະ ສົ່ງອອກໄມ້,

— ຄວາມຫຼາກຫຼາຍຂອງຕ່ອງໂສ້ອຸປະທານຂອງໄມ້ ແລະ ຜະລິດຕະພັນໄມ້.

(c) ຍົກເວັ້ນທີ່ມີການກຳນົດຄວາມສ່ຽງ ໃນຂັ້ນຕອນການປະເມີນຄວາມສ່ຽງ ທີ່ອ້າງອີງໃນຂໍ້ (b) ທີ່ຖືກລະເລີຍ, ຂັ້ນຕອນການຫລຸດຜ່ອນຄວາມສ່ຽງ ທີ່ປະກອບດ້ວຍບັນດາມາດຕະການ ແລະ ຂັ້ນຕອນ ທີ່ພຽງພໍ ແລະ ໃນສັດສ່ວນທີ່ເໝາະສົມ ເພື່ອຫລຸດຜ່ອນຄວາມສ່ຽງໄດ້ຢ່າງມີປະສິດທິຜົນ ແລະ ທີ່ອາດລວມທັງການຮ້ອງຂໍໃຫ້ສະໜອງຂໍ້ມູນເພີ່ມເຕີມ ຫຼື ເອກະສານ ແລະ/ຫລື ຮຽກຮ້ອງໃຫ້ມີການຢັ້ງຢືນຈາກບຸກຄົນທີສາມ.

2. ກົດລະບຽບລະອຽດທີ່ຈຳເປັນ ເພື່ອຮັບປະກັນການຈັດຕັ້ງປະຕິບັດຢ່າງເປັນເອກະພາບ ຂອງວັກທີ 1, ຍົກເວັ້ນທີ່ກ່ຽວກັບບັນທັດຖານໃນການປະເມີນຄວາມສ່ຽງທີ່ກ່ຽວຂ້ອງ ທີ່ໄດ້ອ້າງອີງໃນປະໂຫຍກທີສອງຂອງວັກ 1(b) ຂອງມາດຕານີ້, ຄວນໄດ້ຖືກນຳໃຊ້ໂດຍອີງຕາມຂັ້ນຕອນການບັງຄັບ ທີ່ອ້າງອີງໃນມາດຕາ 18(2). ກົດລະບຽບເຫລົ່ານັ້ນ ຄວນໄດ້ຮັບການນຳໃຊ້ພາຍໃນວັນທີ 3 ມິຖຸນາ 2012.

3. ເມື່ອຄຳນຶງເຖິງການພັດທະນາຕະຫຼາດ ແລະ ປະສົບການທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດລະບຽບການສະບັບນີ້, ໂດຍສະເພາະທີ່ໄດ້ກຳນົດໂດຍຜ່ານການແລກປ່ຽນຂໍ້ມູນ ທີ່ອ້າງອີງໃນມາດຕາ 13 ແລະ ການລາຍງານ ທີ່ໄດ້ອ້າງອີງໃນມາດຕາ 20(3), ຄະນະກຳມາທິການ (Commission) ອາດນຳໃຊ້ delegated acts ໂດຍສອດຄ່ອງກັບ ມາດຕາ 290 TFEU ທີ່ກ່ຽວພັນການບັນທັດຖານການປະເມີນຄວາມສ່ຽງທີ່ກ່ຽວຂ້ອງ ທີ່ອາດຈະຈຳເປັນໃນການປ່ຽນແທນ ທີ່ອ້າງອີງເຖິງໃນປະໂຫຍກທີສອງ ຂອງວັກ 1(b) ຂອງມາດຕານີ້ ໂດຍແນໃສ່ຮັບປະກັນປະສິດທິຜົນຂອງລະບົບການກວດສອບຂໍ້ເທັດຈິງ.

ສຳລັບການປະຕິບັດໂດຍຜ່ານຜູ້ຕາງໜ້າ (delegated acts) ທີ່ອ້າງອີງເຖິງໃນວັກນີ້ ຂັ້ນຕອນໄດ້ກຳນົດໄວ້ໃນມາດຕາ 15, 16 ແລະ 17 ຄວນຈະນຳໃຊ້.

*ມາດຕາ 7*

**ໜ່ວຍງານຮັບຜິດຊອບ**

1. ແຕ່ລະປະເທດສະມາຊິກ ຄວນກຳນົດ ໜ່ວຍງານຮັບຜິດຊອບ ທີ່ມີໜ້າທີ່ໃນການປະຕິບັດ ລະບຽບການສະບັບນີ້.

ບັນດາປະເທດສະມາຊິກ ຄວນແຈ້ງໃຫ້ ຄະນະກຳມາທິການ (Commission) ຮູ້ກ່ຽວກັບຊື່ ແລະ ທີ່ຢູ່ ຂອງໜ່ວຍງານຮັບຜິດຊອບ ພາຍໃນວັນທີ 3 ມິຖຸນາ 2011. ບັນດາປະເທດສະມາຊິກ ຄວນແຈ້ງໃຫ້ ຄະນະກຳມາທິການ (Commission) ກ່ຽວກັບການປ່ຽນແປງໃດໆ ກ່ຽວກັບຊື່ ຫຼື ທີ່ຢູ່ຂອງໜ່ວຍງານຮັບຜິດຊອບດັ່ງກ່າວ.

2. ຄະນະກຳມາທິການ (Commission) ຄວນສາມາດເຂົ້າເຖິງໄດ້ໂດຍທົ່ວໄປ, ລວມທັງຂໍ້ມູນໃນອິນເຕີເນັດ, ລາຍຊື່ຂອງໜ່ວຍງານທີ່ຮັບຜິດຊອບ. ລາຍຊື່ດັ່ງກ່າວ ຄວນໄດ້ຮັບການປັບປຸງຢ່າງເປັນປົກກະຕິ.

*ມາດຕາ 8*

**ໜ່ວຍງານຕິດຕາມກວດກາ**

1. ໜ່ວຍງານຕິດຕາມກວດກາ ຄວນ:
   (a) ຮັກສາ ແລະ ປະເມີນຜົນ ລະບົບກວດສອບຂໍ້ເທັດຈິງ ຢ່າງເປັນປະຈຳ ດັ່ງທີ່ກຳນົດໄວ້ໃນມາດຕາ 6 ແລະ ອະນຸຍາດໃຫ້ຜູ້ປະກອບການມີສິດນຳໃຊ້ໄດ້;
   (b) ຢັ້ງຢືນການນຳໃຊ້ທີ່ຖືກຕ້ອງ ຂອງລະບົບກວດສອບຂໍ້ເທັດຈິງຂອງຕົນ ໂດຍຜູ້ປະກອບການນັ້ນໆ;
   (c) ດຳເນີນການຢ່າງເໝາະສົມ ໃນກໍລະນີທີ່ຜູ້ປະກອບການລົ້ມເຫລວທີ່ຈະນຳໃຊ້ຢ່າງເໝາະສົມ ຕໍ່ລະບົບກວດສອບຂໍ້ເທັດຈິງຂອງຕົນ, ລວມທັງການແຈ້ງການຂອງໜ່ວຍງານທີ່ຮັບຜິດຊອບ ໃນເຫດການທີ່ສຳຄັນ ຫຼື ຂໍ້ຜິດພາດທີ່ເກີດຂຶ້ນຊ້ຳໆໂດຍຜູ້ປະກອບການ.
2. ໜ່ວຍງານໃດໜຶ່ງ ອາດຈະນຳໃຊ້ ເພື່ອໃຫ້ຖືກຮັບຮູ້ໃນນາມໜ່ວຍງານຕິດຕາມກວດກາ ຖ້າຫາກໜ່ວຍງານຂອງຕົນ ປະຕິບັດຕາມຂໍ້ກຳນົດດັ່ງຕໍ່ໄປນີ້:
   (a) ມັນມີລັກສະນະສະເພາະທາງກົດໝາຍ ແລະ ໄດ້ສ້າງຂຶ້ນຕາມກົດໝາຍ ພາຍໃຕ້ ສະຫະພາບ (Union);
   (b) ມັນມີວິຊາການທີ່ແທດເໝາະ ແລະ ຂີດຄວາມສາມາດ ໃນການດຳເນີນໜ້າທີ່ ດັ່ງທີ່ລະບຸໄວ້ໃນວັກ 1; ແລະ
   (c) ມັນຮັບປະກັນວ່າ ບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດ ໃນການດຳເນີນໜ້າທີ່ດັ່ງກ່າວ.
3. ຄະນະກຳມາທິການ (Commission), ພາຍຫລັງປຶກສາຫາລືກັບບັນດາປະເທດສະມາຊິກ, ຄວນຮັບຮູ້ ຜູ້ສະໝັກ ທີ່ປະຕິບັດໄດ້ຕາມຂໍ້ກຳນົດ ທີ່ລະບຸໄວ້ໃນວັກ 2 ໃຫ້ເປັນໜ່ວຍງານຕິດຕາມກວດກາ.

   ການຕັດສິນໃຈ ທີ່ຈະຮັບຮູ້ໃຫ້ເປັນໜ່ວຍງານຕິດຕາມກວດກາ ຄວນໄດ້ຮັບການແຈ້ງໂດຍ ຄະນະກຳມາທິການ (Commission) ໃຫ້ໜ່ວຍງານທີ່ຮັບຜິດຊອບ ຂອງແຕ່ລະປະເທດສະມາຊິກຊາບ.

4. ໜ່ວຍງານຮັບຜິດຊອບ ຄວນດຳເນີນການກວດກາຢ່າງເປັນປົກກະຕິ ເພື່ອຢັ້ງຢືນວ່າ ໜ່ວຍງານຮັບຜິດຊອບຕິດຕາມກວດກາ ດຳເນີນງານພາຍໃຕ້ ຂອບເຂດອຳນາດຂອງໜ່ວຍງານຕິດຕາມກວດກາ ເພື່ອສືບຕໍ່ປະຕິບັດຕາມໜ້າທີ່ ດັ່ງທີ່ກຳນົດໃນວັກ 1 ແລະ ປະຕິບັດຕາມຂໍ້ກຳນົດ ທີ່ລະບຸໄວ້ໃນວັກ 2. ການກວດກາອາດຈະດຳເນີນ ເມື່ອໜ່ວຍງານຮັບຜິດຊອບ ຂອງບັນດາປະເທດສະມາຊິກ ໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງ, ລວມທັງບັນດາທີ່ມີຫລັກຖານຢັ້ງຢືນຈາກບຸກຄົນ ທີສາມ ຫຼື ເມື່ອມີການຄົ້ນພົບຂໍ້ຜິດພາດໃນການຈັດຕັ້ງປະຕິບັດໂດຍລະບົບການກວດສອບຜູ້ເທັດຈິງຂອງຜູ້ປະກອບການ ທີ່ສ້າງຂຶ້ນໂດຍໜ່ວຍງານຕິດຕາມກວດກາ. ບົດລາຍງານຂອງການກວດກາ ຄວນມີສະໜອງໃຫ້ ໂດຍອີງຕາມ Directive 2003/4/EC.

5. ຖ້າຫາກໜ່ວຍງານຮັບຜິດຊອບ ກຳນົດວ່າ ໜ່ວຍງານຕິດຕາມກວດກາ ບໍ່ສາມາດດຳເນີນໜ້າທີ່ ດັ່ງທີ່ລະບຸໄວ້ໃນວັກ 1 ຫຼື ບໍ່ສາມາດປະຕິບັດໄດ້ຕາມຂໍ້ກຳນົດທີ່ລະບຸໄວ້ໃນວັກ 2, ໜ່ວຍງານຮັບຜິດຊອບ ຕ້ອງໄດ້ແຈ້ງໃຫ້ ຄະນະກຳມາທິການ (Commission) ຊາບໂດຍທັນທີ.

6. ຄະນະກຳມາທິການ (Commission) ຄວນເພີກຖອນຄວາມຮັບຮູ້ຕໍ່ໜ່ວຍງານຕິດຕາມກວດກາ ເມື່ອ, ໂດຍສະເພາະບົນພື້ນຖານຂໍ້ມູນທີ່ສະໜອງ ອີງຕາມວັກ 5, ມັນໄດ້ຖືກກຳນົດວ່າ ໜ່ວຍງານຕິດຕາມກວດກາ ບໍ່ສາມາດປະຕິບັດຕາມໜ້າທີ່ ດັ່ງທີ່ກຳນົດໃນວັກ 1 ຫຼື ຂໍ້ກຳນົດ ທີ່ລະບຸໄວ້ໃນວັກ 2. ກ່ອນຈະເພີກຖອນຄວາມຮັບຮູ້ໜ່ວຍງານຕິດຕາມກວດການັ້ນ, ຄະນະກຳມາທິການ (Commission) ຄວນແຈ້ງໃຫ້ປະເທດສະມາຊິກທີ່ກ່ຽວຂ້ອງຊາບ.

   ການຕັດສິນໃຈເພີກຖອນຄວາມຮັບຮູ້ຕໍ່ໜ່ວຍງານຕິດຕາມກວດການັ້ນ ຄວນໄດ້ຮັບການແຈ້ງໂດຍ ຄະນະກຳມາທິການ (Commission) ໃຫ້ແກ່ໜ່ວຍງານທີ່ຮັບຜິດຊອບ ຂອງທຸກໆປະເທດສະມາຊິກຊາບ.

7. ເພື່ອເພີ່ມເຕີມໃສ່ກົດລະບຽບຂັ້ນຕອນ ກ່ຽວກັບການຮັບຮູ້ ແລະ ເພີກຖອນ ໜ່ວຍງານຕິດຕາມກວດກາ ແລະ, ຖ້າຫາກຈຳເປັນ, ຕ້ອງໄດ້ມີການດັດປັບ, ຄະນະກຳມາທິການ (Commission) ອາດນຳໃຊ້ ການປະຕິບັດການຜ່ານຕົວແທນ ໂດຍປະຕິບັດຕາມມາດຕາ 290 TFEU, ໃນຂະນະດຽວກັນກໍ່ຮັບປະກັນວ່າການຮັບຮູ້ ແລະ ເພີກຖອນ ແມ່ນດຳເນີນໃນຮູບແບບທີ່ຍຸຕິທຳ ແລະ ໂປ່ງໃສທີ່ສຸດ.

   ສຳລັບ ການປະຕິບັດການຜ່ານຕົວແທນ ທີ່ລະບຸໄວ້ໃນວັກນີ້ ຂັ້ນຕອນທີ່ກຳນົດໃນມາດຕາ 15, 16 ແລະ 17 ແມ່ນນຳໃຊ້ໄດ້. ການປະຕິບັດການຜ່ານຕົວແທນດັ່ງກ່າວ ຄວນຖືກນຳໃຊ້ພາຍໃນວັນທີ 3 ມີນາ 2012.

8. ກົດລະບຽບທີ່ລະອຽດ ກ່ຽວກັບຄວາມຖີ່ ແລະ ລັກສະນະຂອງການກວດກາ ທີ່ລະບຸໃນວັກ 4, ມີຄວາມຈຳເປັນຕ້ອງຮັບປະກັນປະສິດທິຜົນໃນການຄວບຄຸມດູແລ ໜ່ວຍງານຕິດຕາມກວດກາ ແລະ ການຈັດຕັ້ງປະຕິບັດທີ່ເປັນເອກະພາບຂອງວັກດັ່ງກ່າວ, ຄວນໄດ້ນຳໃຊ້ ໂດຍປະຕິບັດຕາມລະບຽບຂັ້ນຕອນການຄວບຄຸມ ທີ່ລະບຸໃນ ມາດຕາ 18(2). ກົດລະບຽບດັ່ງກ່າວ ຄວນໄດ້ຮັບການນຳໃຊ້ໃນວັນທີ 3ມິຖຸນາ 2012.

*ມາດຕາ 9*

**ລາຍຊື່ຂອງໜ່ວຍງານຕິດຕາມກວດກາ**

ຄະນະກຳມາທິການ (Commission) ຄວນຈັດພິມລາຍຊື່ຂອງໜ່ວຍງານຕິດຕາມກວດກາ ໃນ *Official Journal of the European Union*, C series, ແລະ ຄວນເອົາລົງໃນເວັບໄຊ. ລາຍຊື່ດັ່ງກ່າວ ຄວນໄດ້ຮັບການປັບປຸງຢ່າງເປັນປະຈຳ.

*ມາດຕາ 10*

**ການກວດກາຜູ້ປະກອບການ**

1. ໜ່ວຍງານຮັບຜິດຊອບ ຄວນດຳເນີນການກວດກາ ເພື່ອຢັ້ງຢືນວ່າ ຜູ້ປະກອບການ ປະຕິບັດຕາມຂໍ້ກຳນົດທີ່ລະບຸໄວ້ໃນມາດຕາ 4 ຫຼື 6.

2. ການກວດກາ ທີ່ອ້າງອີງເຖິງໃນວັກ 1 ຄວນດຳເນີນໄປຕາມໄລຍະການທົບທວນແຜນ ຕາມວິທີການທີ່ອີງໃສ່ຄວາມສ່ຽງ. ນອກຈາກນັ້ນ, ການກວດກາ ອາດຈະດຳເນີນການເມື່ອໜ່ວຍງານທີ່ຮັບຜິດຊອບ ໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງ, ລວມທັງບົນພື້ນຖານບັນຫາທີ່ໄດ້ຮັບການຢືນຢັນຈາກຝ່າຍທີສາມ, ກ່ຽວກັບການປະຕິບັດຕາມລະບຽບການສະບັບນີ້ ຂອງຜູ້ປະກອບການ.

3. ການກວດກາ ທີ່ອ້າງອີງເຖິງໃນວັກ 1 ອາດລວມທັງ, ນອກເໜືອຈາກປະເດັນອື່ນໆ (inter alia):

(a) ກວດກາ ລະບົບກວດສອບຂໍ້ເທັດຈິງ, ລວມທັງການປະເມີນຄວາມສ່ຽງ ແລະ ຂັ້ນຕອນການຫລຸດຜ່ອນຄວາມສ່ຽງ;

(b) ກວດກາ ການກຽມເອກະສານ ແລະ ການບັນທຶກຕ່າງໆ ທີ່ສະແດງໃຫ້ເຫັນເຖິງການດຳເນີນງານທີ່ເໝາະສົມຂອງ ລະບົບ ແລະ ຂັ້ນຕອນ ການກວດສອບຂໍ້ເທັດຈິງ;

(c) ການກວດກາເປັນຈຸດ, ລວມທັງການກວດສອບພາກສະໜາມ.

4. ຜູ້ປະກອບການ ອາດຈະສະໜອງການຊ່ວຍເຫລືອທີ່ຈຳເປັນ ເພື່ອອຳນວຍຄວາມສະດວກໃນການປະຕິບັດການກວດສອບ ທີ່ອ້າງອີງເຖິງໃນວັກ 1, ໂດຍສະເພາະແມ່ນກ່ຽວການເຂົ້າໃນສະຖານທີ່ ແລະ ການນຳສະເໜີການກະກຽມເອກະສານ ຫຼື ການບັນທຶກຕ່າງໆ.

5. ໂດຍປາສະຈາກອັກຄະຕິໃດໆຕໍ່ມາດຕາ 19, ຕິດຕາມດ້ວຍການກວດກາທີ່ອ້າງອີງເຖິງໃນວັກ 1, ຈຸດບົກພ່ອງທີ່ໄດ້ຖືກຄົ້ນພົບ, ໜ່ວຍງານຮັບຜິດຊອບ ອາດຈະອອກແຈ້ງການ ກ່ຽວກັບການປະຕິບັດການເພື່ອແກ້ໄຂ ເພື່ອໃຫ້ຜູ້ປະກອບການປະຕິບັດຕາມ. ຍິ່ງໄປກວ່ານັ້ນ, ຂຶ້ນກັບລັກສະນະຂອງຜົນເສຍຫາຍທີ່ຄົ້ນພົບ, ບັນດາປະເທດສະມາຊິກ ອາດຈະດຳເນີນມາດຕະການໃນຊ່ວງລະຫວ່າງເວລາ, ລວມທັງ inter alia:

(a) ຍຶດໄມ້ ຫຼື ຜະລິດຕະພັນໄມ້;

(b) ເກືອດຫ້າມການຂາຍໄມ້ ແລະ ຜະລິດຕະພັນໄມ້ດັ່ງກ່າວ.

*ມາດຕາ 11*

**ການບັນທຶກເກັບກັບການກວດກາ**

1. ໜ່ວຍງານຮັບຜິດຊອບ ຄວນຮັກສາການບັນທຶກຂອງການກວດກາ ດັ່ງທີ່ລະບຸໄວ້ໃນມາດຕາ 10(1), ທີ່ລະບຸໄວ້ ໂດຍສະເພາະແມ່ນລັກສະນະ ແລະ ຜົນໄດ້ຮັບ, ລວມທັງແຈ້ງການໃດໆ ເພື່ອດຳເນີນການແກ້ໄຂທີ່ແຈ້ງອອກ ພາຍໃຕ້ມາດຕາ 10(5). ການບັນທຶກກ່ຽວກັບການກວດກາທັງໝົດ ຄວນເກັບຮັກສາໄວ້ຢ່າງໜ້ອຍເປັນເວລາ 5 ປີ.

2. ຂໍ້ມູນທີ່ອ້າງອີງເຖິງໃນວັກ 1 ຄວນສະໜອງໃຫ້ເມື່ອຈຳເປັນ ໂດຍປະຕິບັດຕາມ Directive 2003/4/EC.

*ມາດຕາ 12*

**ການຮ່ວມມື**

1. ໜ່ວຍງານຮັບຜິດຊອບ ຄວນໃຫ້ການຮ່ວມມືເຊິ່ງກັນແລະກັນ, ຮ່ວມກັບອຳນາດການປົກຄອງທີ່ກ່ຽວຂ້ອງຂອງປະເທດທີສາມ ແລະ ຮ່ວມກັບ ຄະນະກຳມາທິການ (Commission) ເພື່ອຮັບປະກັນການປະຕິບັດທີ່ຖືກຕ້ອງຕາມລະບຽບການສະບັບນີ້.
2. ໜ່ວຍງານຮັບຜິດຊອບ ຄວນແລກປ່ຽນຂໍ້ມູນ ກ່ຽວກັບຄວາມຜິດພາດທີ່ໃຫຍ່ຫຼວງໃດໆທີ່ຄົ້ນພົບ ໂດຍຜ່ານການກວດກາທີ່ອ້າງອີງໃນມາດຕາ 8(4) ແລະ 10(1) ແລະ ກ່ຽວກັບປະເພດຂອງບົດລົງໂທດທີ່ນຳໃຊ້ ໂດຍປະຕິບັດຕາມມາດຕາ 19 ກັບໜ່ວຍງານທີ່ຮັບຜິດຊອບ ຂອງປະເທດສະມາຊິກອື່ນໆ ແລະ ກັບ ຄະນະກຳມາທິການ (Commission).

*ມາດຕາ 13*

**ການຊ່ວຍເຫລືອທາງວິຊາການ, ຄຳແນະນຳ ແລະ ການແລກປ່ຽນຂໍ້ມູນ**

1. ໂດຍປາສະຈາກອັກຄະຕິຕໍ່ພັນທະຂອງຜູ້ປະກອບການ ທີ່ຕ້ອງປະຕິບັດການກວດສອບຂໍ້ເທັດຈິງ ພາຍໃຕ້ມາດຕາ 4(2), ບັນດາປະເທດສະມາຊິກ, ໂດຍການຊ່ວຍເຫລືອຕາມຄວາມເໝາະສົມຈາກ ຄະນະກຳມາທິການ (Commission), ອາດສະໜອງການຊ່ວຍເຫລືອທາງດ້ານວິຊາການ ແລະ ການຊ່ວຍເຫລືອອື່ນໆ ແລະ ຄຳແນະນຳໃຫ້ແກ່ຜູ້ປະກອບການ, ໂດຍຄຳນຶງເຖິງສະພາບການຂອງທຸລະກິດຂະໜາດກາງ-ນ້ອຍ, ເພື່ອອຳນວຍຄວາມສະດວກໃນການປະຕິບັດຕາມຂໍ້ກຳນົດຕ່າງໆ ໃນລະບຽບການສະບັບນີ້, ໂດຍສະເພາະທີ່ພົວພັນກັບການຈັດຕັ້ງປະຕິບັດ ລະບົບການກວດສອບຂໍ້ເທັດຈິງ ໂດຍປະຕິຕາມມາດຕາ 6.
2. ບັນດາປະເທດສະມາຊິກ, ໂດຍການຊ່ວຍເຫລືອຈາກ ຄະນະກຳມາທິການ (Commission) ຕາມຄວາມເໝາະສົມ, ອາດເອື້ອອຳນວຍຄວາມສະດວກໃນການແລກປ່ຽນ ແລະ ເຜີຍແຜ່ຂໍ້ມູນທີ່ກ່ຽວຂ້ອງ ກ່ຽວກັບການຕັດໄມ້ທີ່ຜິດກົດໝາຍ, ໂດຍສະເພາະແມ່ນໃນການໃຫ້ການຊ່ວຍເຫລືອຜູ້ປະກອບການ ໃນການປະເມີນຄວາມສ່ຽງ ທີ່ກຳນົດໃນມາດຕາ 6(1)(b), ແລະ ກ່ຽວກັບວິທີການຈັດຕັ້ງປະຕິບັດທີ່ດີ ກ່ຽວກັບການຈັດຕັ້ງປະຕິບັດຕາມລະບຽບການສະບັບນີ້.
3. ການຊ່ວຍເຫລືອ ຄວນສະໜອງໃຫ້ດ້ວຍຮູບແບບທີ່ຫລີກລ່ຽງການອະນຸໂລມຄວາມຮັບຜິດຊອບຂອງໜ່ວຍງານຮັບຜິດຊອບ ແລະ ຄົງໄວ້ເຊິ່ງຄວາມເປັນເອກະລາດ ໃນການບັງຄັບໃຊ້ ລະບຽບການສະບັບນີ້.

*ມາດຕາ 14*

**ການດັດແກ້ ເອກະສານຊ້ອນທ້າຍ**

ເພື່ອພິຈາລະນາເຖິງ, ໃນທາງກົງກັນຂ້າມ, ປະສົບການທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດລະບຽບການສະບັບນີ້, ໂດຍສະເພາະດັ່ງທີ່ໄດ້ກຳນົດໃນການລາຍງານ ດັ່ງທີ່ລະບຸໄວ້ໃນມາດຕາ 20(3) ແລະ (4) ແລະ ໂດຍຜ່ານການແລກປ່ຽນຂໍ້ມູນ ທີ່ລະບຸໄວ້ໃນ ມາດຕາ 13, ແລະ, ໃນທາງກົງກັນຂ້າມ, ການພັດທະນາ ທີ່ກ່ຽວກັບລັກສະນະທາງວິຊາການ, ຜູ້ຊົມໃຊ້ ແລະ ຂັ້ນຕອນການຜະລິດໄມ້ ແລະ ຜະລິດຕະພັນໄມ້, Commission ອາດນຳໃຊ້ ການປະຕິບັດການໂດຍຜ່ານຕົວແທນ ໂດຍປະຕິບັດຕາມມາດຕາ 290 TFEU ໂດຍການດັດປັບ ແລະ ໃຊ້ຮ່ວມກັບ

ລາຍການຂອງໄມ້ ແລະ ຜະລິດຕະພັນໄມ້ ທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍດັ່ງກ່າວ. ການປະຕິບັດການໂດຍຜ່ານຕົວແທນ ຕ້ອງບໍ່ສ້າງອຸປະສັກໃຫ້ແກ່ຜູ້ປະກອບການ.

ສຳລັບ ການປະຕິບັດການໂດຍຜ່ານຕົວແທນ ທີ່ກຳນົດໃນມາດຕານີ້ ຂັ້ນຕອນໄດ້ລະບຸໄວ້ໃນມາດຕາ 15, 16 ແລະ 17 ຈະຖືກນຳໃຊ້.

*ມາດຕາ 15*

**ການມອບໝາຍໜ້າທີ່**

1. ອຳນາດໃນການນຳໃຊ້ ການປະຕິບັດການໂດຍຜ່ານຕົວແທນ ດັ່ງທີ່ລະບຸໄວ້ໃນມາດຕາ 6(3), 8(7) ແລະ 14 ຄວນປະຕິບັດຕາມ ຄະນະກຳມາທິການ (Commission) ໃນໄລຍະ ເຈັດປີ ນັບແຕ່ວັນທີ 2 ທັນວາ 2010. ຄະນະກຳມາທິການ (Commission) ຄວນສົ່ງບົດລາຍງານ ທີ່ກ່ຽວກັບການມອບອຳນາດ ບໍ່ໃຫ້ຊ້າກວ່າສາມເດືອນ ກ່ອນທ້າຍໄລຍະ ສາມປີ ພາຍຫລັງມື້ທີ່ນຳໃຊ້ລະບຽບການດັ່ງກ່າວ. ການມອບອຳນາດຄວນໄດ້ຮັບການຂະຫຍາຍເວລາອອກໄປຢ່າງອັດຕະໂນມັດ ໃນໄລຍະເວລາເທົ່າກັນ, ນອກເສຍຈາກວ່າ ລັດຖະສະພາເອີຣົບ (European Parliament) ຫລື Council ເພີກຖອນສິດດັ່ງກ່າວ ໂດຍປະຕິບັດຕາມມາດຕາ 16.
2. ທັນທີທີ່ນຳໃຊ້ ການປະຕິບັດການໂດຍຜ່ານຕົວແທນ, ຄະນະກຳມາທິການ (Commission) ຄວນແຈ້ງໃຫ້ລັດຖະສະພາເອີຣົບ (European Parliament) ແລະ ໃຫ້ Council ຊາບໂດຍພ້ອມພຽງກັນ.
3. ອຳນາດໃນການນຳໃຊ້ ການປະຕິບັດການໂດຍຜ່ານຕົວແທນ ທີ່ໄດ້ປະຕິບັດຕາມ ຄະນະກຳມາທິການ (Commission) ແມ່ນຂຶ້ນກັບເງື່ອນໄຂຕ່າງໆ ທີ່ກຳນົດໃນມາດຕາ 16 ແລະ 17.

*ມາດຕາ 16*

**ການຍົກເລີກການມອບໝາຍໜ້າທີ່**

1. ການມອບໝາຍໜ້າທີ່ ທີ່ອ້າງອີງໃນມາດຕາ 6(3), 8(7) ແລະ 14 ອາດຈະຖືກເພີກຖອນເວລາໃດກໍ່ໄດ້ ຖ້າເຫັນວ່າຈຳເປັນ ໂດຍ ລັດຖະສະພາເອີຣົບ (European Parliament) ຫຼື ໂດຍ Council.
2. ສະຖາບັນທີ່ໄດ້ເລີ່ມຂັ້ນຕອນພາຍໃນ ໃນການຕັດສິນໃຈວ່າຈະເພີກຖອນການມອບໝາຍອຳນາດ ຄວນນຳໃຊ້ທຸກຄວາມພະຍາຍາມ ໃນການແຈ້ງໃຫ້ສະຖາບັນອື່ນ ແລະ ຄະນະກຳມາທິການ (Commission) ຊາບພາຍໃນກຳນົດເວລາທີ່ເໝາະສົມ ກ່ອນທີ່ຈະຕັດສິນໃຈເດັດຂາດ, ໂດຍລະບຸອຳນາດທີ່ມອບໝາຍ ທີ່ຈະຖືກເພີກຖອນ ແລະ ຖ້າເປັນໄປໄດ້ ກໍ່ໃຫ້ສະໜອງເຫດຜົນໃນການເພີກຖອນດັ່ງກ່າວ.
3. ການຕັດສິນໃຈເພີກຖອນ ຄວນກຳນົດໃຫ້ລະອຽດ ກ່ຽວກັບເວລາສິ້ນສຸດຂອງອຳນາດທີ່ມອບໝາຍ ນັ້ນໃນແຈ້ງການ ເຊິ່ງຈະມີຜົນທັນທີ ຫຼື ພາຍຫລັງມື້ທີ່ກຳນົດໃນແຈ້ງການດັ່ງກ່າວ. ອັນນີ້ ຈະບໍ່ມີຜົນກະທົບຕໍ່ຜົນ

ສັກສິດຂອງການດຳເນີນການ ໂດຍຜ່ານຜູ້ຕາງໜ້າທີ່ໄດ້ມີຜົນບັງຄັບໃຊ້ກ່ອນໜ້ານັ້ນ. ອັນນີ້ ຄວນຖືກຈັດພິມໃນ *Official Journal of the European Union*.

*ມາດຕາ 17*

**ການຄັດຄ້ານຕໍ່ ການປະຕິບັດການຜ່ານຕົວແທນ (delegated acts)**

1. ລັດຖະສະພາເອີຣົບ (European Parliament) ຫຼື Council ອາດຄັດຄ້ານຕໍ່ການປະຕິບັດການຜ່ານຕົວແທນ ພາຍໃນກຳນົດເວລາສອງເດືອນ ນັບແຕ່ມື້ແຈ້ງການ. ໃນໄລຍະເບື້ອງຕົ້ນ ລັດຖະສະພາເອີຣົບ (European Parliament) ຫຼື Council ໄລຍະເວລາດັ່ງກ່າວຄວນໄດ້ຮັບການຂະຫຍາຍອອກອີກປະມານສອງເດືອນ.

2. ຖ້າ, ເມື່ອໄລຍະເວລາດັ່ງກ່າວໝົດອາຍຸຄວາມ, ລັດຖະສະພາເອີຣົບ (European Parliament) ຫຼື Council ໄດ້ຄັດຄ້ານຕໍ່ການປະຕິບັດການຜ່ານຕົວແທນ, ມັນຄວນໄດ້ຮັບການຈັດພິມໃນ *Official Journal of the European Union* ແລະ ຄວນມີຜົນບັງຄັບໃຊ້ນັບແຕ່ມື້ລົງວັນທີ່ເປັນຕົ້ນໄປ.

ການປະຕິບັດການຜ່ານຕົວແທນ, ອາດຖືກຈັດພິມໃນ *Official Journal of the European Union* ແລະ ມີຜົນບັງຄັບໃຊ້ ກ່ອນທີ່ຈະໝົດອາຍຸ ຖ້າຫາກ ລັດຖະສະພາເອີຣົບ (European Parliament) ແລະ Council ໄດ້ແຈ້ງໃຫ້ ຄະນະກຳມາທິການ (Commission) ຊາບເຖິງເຈດຈຳນົງທີ່ຈະບໍ່ຍື່ນການຄັດຄ້ານ.

3. ຖ້າ ລັດຖະສະພາເອີຣົບ (European Parliament) ຫຼື Council ຄັດຄ້ານ ການປະຕິບັດການຜ່ານຕົວແທນ, ການປະຕິບັດການຜ່ານຕົວແທນດັ່ງກ່າວ ຈະບໍ່ມີຜົນບັງຄັບໃຊ້. ສະຖາບັນ ເຊິ່ງຄັດຄ້ານ ຕ້ອງໄດ້ໃຫ້ເຫດຜົນສຳລັບການຄັດຄ້ານຕໍ່ ການປະຕິບັດການຜ່ານຕົວແທນ.

*ມາດຕາ 18*

**ຄະນະກຳມະການ**

1. ຄະນະກຳມາທິການ (Commission) ຄວນໄດ້ຮັບການສະໜັບສະໜູນຈາກ ຄະນະກຳມະການ FLEGT ທີ່ສ້າງຕັ້ງຂຶ້ນພາຍໃຕ້ມາດຕາ 11 ຂອງ Regulation (EC) ສະບັບເລກທີ 2173/2005.
2. ຖ້າມີການອ້າງອີງເຖິງວັກນີ້, ມາດຕາ 5 ແລະ 7 ຂອງ Decision 1999/468/EC ຄວນຖືກນຳໃຊ້, ໂດຍສະເພາະທີ່ກ່ຽວພັນກັບ ຂໍ້ກຳນົດໃນ ມາດຕາ 8.
3. ກຳນົດເວລາທີ່ລະບຸໃນ ມາດຕາ 5(6) ຂອງ Decision 1999/468/EC ຄວນກຳນົດເປັນໄລຍະສາມເດືອນ.

*ມາດຕາ 19*

**ມາດຕະການລົງໂທດ**

1. ບັນດາປະເທດສະມາຊິກ ຄວນກຳນົດກົດລະບຽບວ່າດ້ວຍການລົງໂທດທີ່ຈະນຳໃຊ້ຕໍ່ຜູ້ຝ່າຝືນຕໍ່ຂໍ້ກຳນົດໃນລະບຽບການສະບັບນີ້ ແລະ ຄວນນຳໃຊ້ມາດຕະການຕ່າງໆທີ່ເໝາະສົມ ເພື່ອຮັບປະກັນວ່າໄດ້ຖືກຈັດຕັ້ງປະຕິບັດ.
2. ມາດຕະການໆລົງໂທດ ທີ່ກຳນົດໄວ້ຄວນມີຜົນບັງຄັບໃຊ້, ເໝາະສົມ ແລະ ຢັບຢັ້ງການຝ່າຝືນ ແລະ ອາດລວມທັງ, inter alia:

   (a) ການປັບໄໝ ຕໍ່ຜົນເສຍຫາຍທີ່ມີຕໍ່ສິ່ງແວດລ້ອມ ໃນລະດັບທີ່ເໝາະສົມ, ມູນຄ່າຂອງໄມ້ ຫຼື ຜະລິດຕະພັນໄມ້ ທີ່ກ່ຽວຂ້ອງ ແລະ ການສູນເສຍລາຍຮັບຈາກອາກອນ ແລະ ເສດຖະກິດ ເນື່ອງມາຈາກການຝ່າຝືນ, ການຄິດໄລ່ລະດັບຂອງການປັບໄໝ ດ້ວຍວິທີການດັ່ງກ່າວ ກໍ່ເພື່ອຮັບປະກັນວ່າ ຄວາມສູນເສຍຕໍ່ເສດຖະກິດທີ່ຄວນໄດ້ຮັບ ຈາກການຝ່າຝືນດັ່ງກ່າວ ແມ່ນເປັນໄປຢ່າງມີປະສິດທິຜົນ, ໂດຍປາສະຈາກອັກຄະຕິໃດໆຕໍ່ກັບສິດທິໃນການຄອບຄອບ, ແລະ ຄ່ອຍໆເພີ່ມລະດັບຂອງການປັບໄໝຂຶ້ນສຳລັບການຝ່າຝືນທີ່ກະທຳຊ້ຳໆອີກ;

   (b) ຍຶດໄມ້ ແລະ ຜະລິດຕະພັນໄມ້ທີ່ຝ່າຝືນ;

   (c) ໂຈະການ ອະນຸມັດທາງການຄ້າ ໂດຍທັນທີ.
3. ບັນດາປະເທດສະມາຊິກ ຄວນແຈ້ງບັນດາຂໍ້ກຳນົດດັ່ງກ່າວ ໃຫ້ແກ່ ຄະນະກຳມາທິການ (Commission) ຮັບຊາບ ແລະ ຄວນແຈ້ງໂດຍທັນທີເຖິງການດັດແກ້ໃດໆທີ່ໄດ້ມີໃນພາຍຫລັງ ເຊິ່ງມີການປ່ຽນແປງຕໍ່ຂໍ້ກຳນົດດັ່ງກ່າວ.

*ມາດຕາ 20*

**ການລາຍງານ**

1. ບັນດາປະເທດສະມາຊິກ ຄວນລາຍງານ ການນຳໃຊ້ລະບຽບການສະບັບນີ້ ໃນໄລຍະສອງປີຜ່ານມາ ໃຫ້ແກ່ ຄະນະກຳມາທິການ (Commission) ຊາບ ພາຍໃນວັນທີ 30 ເມສາ ຂອງທຸກໆປີທີສອງ ເລີ່ມແຕ່ວັນທີ 3 ມີນາ 2013.
2. ບົນພື້ນຖານຂອງການລາຍງານດັ່ງກ່າວ, ຄະນະກຳມາທິການ (Commission) ຄວນສັງລວມບົດລາຍງານ ແລະ ຍື່ນເຖິງ ລັດຖະສະພາເອີຣົບ (European Parliament) ແລະ ຍື່ນເຖິງ Council ທຸກໆສອງປີ. ໃນການກະກຽມບົດລາຍງານດັ່ງກ່າວ, ຄະນະກຳມາທິການ (Commission) ຄວນສືບຕໍ່ໃນການທົບທວນ ແລະ ການດຳເນີນງານຂອງ FLEGT VPAs ໂດຍອີງຕາມ Regulation (EC) ສະບັບເລກທີ 2173/2005 ແລະ ການປະກອບສ່ວນໃສ່ການຫລຸດຜ່ອນການຕັດໄມ້ຢ່າງຜິດກົດໝາຍ ແລະ ຜະລິດຕະພັນໄມ້ທີ່ເຮັດຈາກໄມ້ທີ່ຕັດຢ່າງຜິດກົດໝາຍດັ່ງກ່າວ ເພື່ອບໍ່ໃຫ້ສິ່ງເຂົ້າຈຳໜ່າຍໃນຕະຫຼາດພາຍໃນ.

3. ພາຍໃນວັນທີ 3 ທັນວາ 2015 ແລະ ທຸກໆ ທີກ ປີ ນັບຈາກນັ້ນ, ຄະນະກຳມາທິການ (Commission) ຄວນ, ບົນພື້ນຖານຂອງການລາຍງານ ກ່ຽວກັບປະສົບການຈາກການນຳໃຊ້ລະບຽບການດັ່ງກ່າວ, ທົບທວນ ການນຳໃຊ້ ແລະ ປະສິດທິຜົນຂອງລະບຽບການສະບັບນີ້, ລວມທັງການປ້ອງກັນການຕັດໄມ້ຢ່າງຜິດກົດ ໝາຍ ຫຼື ຜະລິດຕະພັນໄມ້ ທີ່ເຮັດຈາກໄມ້ທີ່ຕັດຢ່າງຜິດກົດໝາຍ ບໍ່ໃຫ້ສິ່ງເຂົ້າຕະຫຼາດຂອງສະຫະພາບເອີຣົບ. ອັນນີ້ຄວນພິຈາລະນາເຖິງຜົນກະທົບຂອງລະບົບບໍລິຫານຕໍ່ທຸລະກິດຂະໜາດກາງ-ນ້ອຍ ແລະ ການຄອບຄຸມຂອງຜະລິດຕະພັນ. ອາດມີບົດລາຍງານມາພ້ອມ, ຖ້າເຫັນວ່າຈຳເປັນ, ໂດຍສິ່ງບົດສະເໜີດ້ານນິຕິກຳທີ່ເໝາະສົມ.

4. ບົດລາຍງານສະບັບທຳອິດທີ່ກ່າວເຖິງໃນວັກ 3 ຄວນລວມເອົາການປະເມີນຜົນຂອງ ສະພາບການທາງເສດຖະກິດ ແລະ ການຄ້າຂອງ ສະຫະພາບ (Union) ໂດຍສະເພາະທີ່ກ່ຽວພັນກັບຜະລິດຕະພັນທີ່ກຳນົດພາຍໃຕ້ ພາກ 49 ຂອງ Combined Nomenclature, ໂດຍຄຳນຶງເຖິງຄວາມສາມາດໃນການແຂ່ງຂັນຂອງຂະແໜງການທີ່ກ່ຽວຂ້ອງ, ທັງນີ້ກໍ່ເພື່ອພິຈາລະນາເຖິງການລວມໄມ້ ແລະ ຜະລິດຕະພັນໄມ້ ເຂົ້າໃນລາຍການຕາມຄວາມຈຳເປັນ ດັ່ງທີ່ກຳນົດໃນເອກະສານຊ້ອນທ້າຍ ຂອງລະບຽບການສະບັບນີ້.

ບົດລາຍງານດັ່ງກ່າວ ທີ່ອ້າງອີງໃນວັກຍ່ອຍທຳອິດ ຄວນລວມເອົາການປະເມີນປະສິດທິຜົນຂອງການເກືອດຫ້າມ ໃນການຈຳໜ່າຍໄມ້ ແລະ ຜະລິດຕະພັນໄມ້ທີ່ຜິດກົດໝາຍ ເຂົ້າໃນຕະຫຼາດສະຫະພາບເອີຣົບ ດັ່ງທີ່ກຳນົດໃນມາດຕາ 4(1) ລວມທັງລະບົບການກວດສອບຂໍ້ເທັດຈິງ ທີ່ກຳນົດໃນມາດຕາ 6.

*ມາດຕາ 21*

**ການມີຜົນບັງຄັບໃຊ້ທາງກົດໝາຍ ແລະ ການນຳໃຊ້**

ລະບຽບການສະບັບນີ້ ມີຜົນສັກສິດ ນັບຈາກມື້ທີ 20 ພາຍຫລັງທີ່ໄດ້ຈັດພິມໃນ *Official Journal of the European Union*.

ລະບຽບການສະບັບນີ້ ຄວນຖືກນຳໃຊ້ ນັບແຕ່ວັນທີ 3 ມີນາ 2013. ເຖິງຢ່າງໃດກໍ່ຕາມ, ມາດຕາ 6(2), 7(1), 8(7) ແລະ 8(8) ຄວນຖືກນຳໃຊ້ນັບແຕ່ວັນທີ 2 ທັນວາ 2010.

ລະບຽບການສະບັບນີ້ ຈະມີຂໍ້ຜູກພັນຕໍ່ບັນດາປະເທດສະມາຊິກ ທັງໝົດ ແລະ ໂດຍກົງ.

ທີ່ ສະຕຣາເບີກ, ວັນທີ 20 ຕຸລາ 2010.

*ສຳລັບ European Parliament* — *ປະທານ* J. BUZEK

*ສະລັບ Council* — *ປະທານ* O. CHASTEL

*ເອກະສານຊ້ອນທ້າຍ*

**ໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ຖືກຈັດໃນ ການຮຽກຊື່ລວມ (Combined Nomenclature) ທີ່ກຳນົດໃນ ເອກະສານຊ້ອນທ້າຍ I ຂອງ Council Regulation (EEC) ສະບັບເລກທີ 2658/87 ([10]), ທີ່ລະບຽບການນີ້ພົນບັງຄັບໃຊ້**

— 4401 ໄມ້ເຊື້ອໄຟ (Fuel wood), ເປັນທ່ອນ, ເປັນຕ່ອນນ້ອຍ, ເປັນກິ່ງກ້ານ, ເປັນຟືນ ຫຼື ໃນຮູບແບບຄ້າຍຄືກັນ; ໄມ້ ເປັນແຜ່ນ ຫຼື ເປັນຕ່ອນນ້ອຍ; ຂີ້ເລື່ອຍ ແລະ ໄມ້ເສດ ແລະ ເສດໄມ້, ບໍ່ວ່າຈະລວມກັນ ຫຼື ບໍ່ (agglomerated in logs), briquettes, pellets ຫລື ຮູບແບບຄ້າຍຄືກັນກໍ່ຕາມ

— 4403 ໄມ້ທຍາບ, ບໍ່ວ່າຈະຖາກ ຫຼື ລອກເປືອກອອກ ຫຼື roughly squared

— 4406 ໄມ້ລາງລົດໄຟ ຫຼື ໄມ້ທາງລົດລາງ (cross-ties) ທີ່ໃຊ້ໄມ້

— 4407 ໄມ້ເລື່ອຍ ຫຼື ຕັດທາງຍາວ, ຊອຍ ຫຼື ປອກ, ບໍ່ວ່າຈະເປັນແຜ່ນລຽບ, ຫຼື ຂັດດ້ວຍກະດາດຊາຍ, ຫຼື end-jointed, ທີ່ມີຄວາມໜາເກີນ 6 ມມ

— 4408 ແຜ່ນໄມ້ອັດ (ລວມທັງແຜ່ນທີ່ຊອຍເພື່ອເຄືອບໜ້າໄມ້), ສຳລັບໄມ້ອັດ ຫຼື ແຜ່ນເຄືອບໄມ້ອື່ນໆ, ທີ່ເລື່ອຍທາງຍາວ, ຊອຍ ຫຼື ລອກ, ບໍ່ວ່າຈະເປັນໜ້າລຽບ ຫຼື ບໍ່ກໍ່ຕາມ, ຂັດດ້ວຍກະດາດຊາຍ, ຕໍ່ກັນ ຫຼື end- jointed, ທີ່ມີຄວາມໜາເກີນ 6 ມມ

— 4409 ໄມ້ (ລວມທັງ ທີ່ມີລາຍ ແລະ ສະຫລັກ ສຳລັບໃຊ້ປູພື້ນປາເກ, ທີ່ບໍ່ທັນຕໍ່ກັນ) ທີ່ມີຮູບແບບຕໍ່ກັນ (tongued, grooved, rebated, chamfered, ຕໍ່ກັນເປັນຮູບຕົວ V, beaded, moulded, ມົນ ຫຼື ຄ້າຍຄື) ຕາມຂອບ, ທ້າຍ ຫລືດ້ານໜ້າ, ບໍ່ວ່າຈະເປັນແຜ່ນລຽບ, ຂັດດ້ວຍກະດາດຊາຍ ຫຼື end-jointed

— 4410 ແຜ່ນກະດານ Particle board, oriented strand board (OSB) ແລະ ແຜ່ນບອດທີ່ຄ້າຍຄືກັນ (ເຊັ່ນ: waferboard) ທີ່ເຮັດຈາກໄມ້ ຫຼື ອຸປະກອນທີ່ຄ້າຍຄືໄມ້, ບໍ່ວ່າຈະຕໍ່ໃສ່ກັນດ້ວຍຢາງໄມ້ ຫຼື ແນວຕິດແບບທຳມະຊາດ

— 4411 ແຜ່ນໄຟເບີໄມ້ ຫຼື ອຸປະກອນທີ່ຄ້າຍຄືໄມ້, ບໍ່ວ່າຈະ ຕໍ່ກັນດ້ວຍຢາງໄມ້ ຫຼື ແນວຕິດແບບທຳມະຊາດ

— 4412 ໄມ້ອັດ, ແຜ່ນໄມ້ອັດ ຫຼື ແຜ່ນເຄືອບທີ່ຄ້າຍຄືກັນ

— 4413 00 00 Densified wood, ທີ່ເປັນ blocks, ເປັນ plates, strips ຫຼື profile shapes

— 4414 00 ຂອບໄມ້ ສຳລັບຮູບແຕ້ມ, ຮູບຖ່າຍ, ແວ່ນ ຫຼື ອຸປະກອນຄ້າຍຄືກັນ

— 4415 ກ່ອງໃຊ້ໃສ່ເຄື່ອງ, ກ່ອງ, ລັງ, ຝຸຍ ຫຼື ທີ່ຄ້າຍຄືກັນ, ທີ່ເປັນໄມ້; cable-drums of wood; pallets, box pallets ແລະ other load boards, ທີ່ເຮັດດ້ວຍໄມ້; pallet collars of wood

— (ອຸປະກອນທີ່ບໍ່ໄດ້ຫຸ້ມຫໍ່ ທີ່ນຳໃຊ້ຄືກັບອຸປະກອນທີ່ໃຊ້ຫຸ້ມຫໍ່ ເພື່ອຊ່ວຍ, ປ້ອງກັນ ຫຼື ໃສ່ຜະລິດຕະພັນ ທີ່ສົ່ງເຂົ້າຈຳໜ່າຍໃນຕະຫຼາດ.)

— 4416 00 00 ຖັງໄມ້ (Casks), ຖັງ (barrels), vats, tubs ແລະ ຜະລິດຕະພັນທີ່ເຮັດຈາກທອງ ທີ່ນຳໃຊ້ໄມ້ເປັນສ່ວນປະກອບ ລວມທັງ ບັນໄດ

---

[10] Council Regulation (EEC) No 2658/87 of 23 July 1987 on the tariff and statistical nomenclature and on the Common Customs Tariff (OJ L 256, 7.9.1987, p. 1).

— 4418 ໄມ້ທີ່ໃຊ້ປະກອບ/ເຊື່ອມຕໍ່ ແລະ ງານໄມ້, ລວມທັງ cellular wood panels, ແຜ່ນປູພື້ນທີ່ຕໍ່ກັນ, shingles ແລະ shakes

— ເຍື່ອໄມ້ ແລະ ເຈັ້ຍ ໃນພາກ 47 ແລະ 48 ຂອງ Combined Nomenclature, ຍົກເວັ້ນ ຜະລິດຕະພັນທີ່ເຮັດຈາກໄມ້ໄຜ່ ແລະ ທີ່ນຳສິ່ງເສດເຫລືອມານຳໃຊ້ (ສິ່ງເສດເຫລືອ ແລະ ເສດໄມ້)

— 9403 30, 9403 40, 9403 50 00, 9403 60 and 9403 90 30 ເຄື່ອງເຟີນີເຈີ້ທີ່ເຮັດດ້ວຍໄມ້

— 9406 00 20 ອາຄານທີ່ສ້າງໄວ້ແລ້ວ (Prefabricated buildings)